vhs DVV International Laos 15 YEARS

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

ຈົດໝາຍຂ່າວ 2024

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ

## ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້




*ສະໜັບສະໜູນໂດຍ*

Federal Ministry
for Economic Cooperation
and Development



ຮຽນທ່ານຜູ້ອ່ານທີ່ຮັກແພງ,

ຂ້າພະເຈົ້າຮູ້ສຶກຍິນດີຫຼາຍທີ່ໄດ້ນຳສະເໜີຈົດໝາຍຂ່າວສະບັບຄົບຮອບຂອງຫ້ອງການພາກພື້ນປະຈຳພາກພື້ນອາຊີຕາເວັນອອກສຽງໃຕ້ຂອງ ດີວີວີ ອິນເຕີເນເຊີນແນວ. ໃນປີ 2024 ນີ້, ພວກເຮົາກຳລັງສະເຫຼີມສະຫຼອງຄົບຮອບ 15 ປີ ຂອງການໃຫ້ຄຳໝັ້ນສັນຍາຂອງພວກເຮົາ ໃນການສະໜັບສະໜູນການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດໃນລາວ ເຊິ່ງເລີ່ມຈາກການເປີດຫ້ອງການປະຈຳພາກພື້ນຂອງພວກເຮົາໃນປີ 2009.

ເມື່ອເບິ່ງຫວນຄືນ, ພວກເຮົາສາມາດພູມໃຈໃນສິ່ງທີ່ພວກເຮົາບັນລຸໄດ້ໃນ 1 ທົດສະວັດເຄິ່ງທີ່ຜ່ານມາ: ການຮັບຮູ້ເພີ່ມຂຶ້ນຂອງ ວຽກງານການຮຽນຮູ້ຕະຫຼອດຊີວິດ, ຄວາມມຸ່ງໝັ້ນຫຼາຍຂຶ້ນໃນການສຶກສານອກໂຮງຮຽນ, ໂຄງສ້າງທີ່ຊັດເຈນ, ພາລະບົດບາດ ແລະ ຄວາມຮັບຜິດຊອບ, ການວິໄຈທີ່ໄດ້ປັບປຸງ, ແນວທາງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ທີ່ທັນສະໄໝ ແລະ ໂອກາດການຝຶກອົບຮົມທີ່ຍິ່ງໃຫຍ່ສຳລັບຜູ້ບໍລິຫານ, ຜູ້ຄຸ້ມຄອງ ແລະ ພະນັກງານຄູ, ສິ່ງຜົນໃຫ້ກຸ່ມເປົ້າໝາຍໄດ້ຮັບບໍລິການທີ່ດີກວ່າ. ເວົ້າໄດ້ວ່າຄວາມສຳເລັດນີ້ ຄົງຈະເປັນໄປບໍ່ໄດ້ ຖ້າບໍ່ມີເຄືອຂ່າຍຄູ່ຮ່ວມພັດທະນາ ຂອງພວກເຮົາ ທີ່ພິສູດແລ້ວ ຄື: ກົມການສຶກສານອກໂຮງຮຽນ (ກສນ) ແລະ ສູນພັດທະນາການສຶກສານອກໂຮງຮຽນ (ສພນ) ຈາກກະຊວງສຶກສາທິການ ແລະ ກິລາ (ສສກ), ຄະນະສຶກສາສາດ (ຄສສ) ຈາກມະຫາວິທະຍາໄລແຫ່ງຊາດ (ມຊ) ແລະ ສູນກາງຊາວໜຸ່ມ (ສຊປປລ) ລວມທັງອົງການຈັດຕັ້ງຂອງລັດ ແລະ ຄູ່ຮ່ວມພັດທະນາອື່ນໆ ທີ່ລ້ວນແຕ່ສູ້ຊົນເພື່ອເປົ້າໝາຍດຽວກັນຄື: ການສະໜອງໂອກາດການຮຽນຮູ້ຕະຫຼອດຊີວິດທີ່ມີຄຸນນະພາບສູງ ໃຫ້ແກ່ປະຊາຊົນທັງໝົດໃນ ສປປ ລາວ, ໂດຍສະເພາະຜູ້ທີ່ຖືກປະຖິ້ມໄວ້ຫຼາຍທີ່ສຸດ.

ເຖິງຢ່າງໃດກໍ່ຕາມ, ເມື່ອພວກເຮົາສະເຫຼີມສະຫຼອງຄວາມສຳເລັດ, ພວກເຮົາຕ້ອງບໍ່ລືມວ່າຍັງມີສິ່ງທ້າທາຍ ແລະ ໜ້າວຽກອີກຫຼາຍຢ່າງທີ່ລໍຖ້າຢູ່ຂ້າງໜ້າ. ງົບປະມານພາກລັດສຳລັບການສຶກສານອກໂຮງຮຽນຫ່າງໄກຈາກຄຳວ່າພຽງພໍ. ກອບແນວຄວາມຄິດຕ້ອງໄດ້ຮັບການປັບປຸງຕື່ມອີກ ແລະ ພະນັກງານທຸກຂັ້ນຕ້ອງໄດ້ຮັບການຝຶກອົບຮົມເພີ່ມເຕີມ. ທ່າແຮງຄວາມສາມາດຂອງການສຶກສານອກໂຮງຮຽນຕ້ອງໄດ້ອະທິບາຍໃຫ້ກຸ່ມຜູ້ມີສ່ວນຮ່ວມຮັບຮູ້ຢ່າງກວ້າງຂວາງ, ນອກເໜືອໄປຈາກຂອບວຽກງານການສຶກສານອກໂຮງຮຽນ. ດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດທີ່ໄດ້ຮັບຮອງເອົາໂດຍນາຍົກລັດຖະມົນຕີ ໃນປີ 2020 ແມ່ນການປູທາງໄປສູ່ການພັດທະນາໃນຕໍ່ໜ້າ ແລະ ມີການໂອ້ລົມສົນທະນາຫຼາຍຝ່າຍຢ່າງຕໍ່ເນື່ອງ ເຊິ່ງກ່ຽວຂ້ອງກັບເກືອບທຸກກະຊວງ. ໃນສະພາບການດັ່ງກ່າວ, ຈົດໝາຍຂ່າວສະບັບນີ້ໄດ້ແຈ້ງໃຫ້ຮູ້ກ່ຽວກັບການພັດທະນາແຜນປະຕິບັດງານສຳລັບການຮຽນຮູ້ຕະຫຼອດຊີວິດ. ອີກບົດຄວາມໜຶ່ງແມ່ນກ່ຽວກັບການແນະນຳແນວທາງການສ້າງລະບົບການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ (ALESBA) ເຊິ່ງຈະຊ່ວຍກຽມພື້ນຖານສຳລັບເພື່ອການຮ່ວມມືໃນອະນາຄົດຂອງພວກເຮົາ. ນອກນັ້ນທ່ານຍັງຈະອ່ານກ່ຽວກັບການຮ່ວມມືພາກພື້ນທີ່ເພີ່ມຂຶ້ນຂອງຄູ່ຮ່ວມພັດທະນາດ້ານການວິໄຈຂອງພວກເຮົາ, ການລິເລີ່ມສູນການຮຽນຮູ້ຊຸມຊົນຕົວແບບ (Model CLC) ຂອງພວກເຮົາ, ວິທີການການຮຽນຮູ້ດິຈິຕ໋ອນ ແລະ ໂຄງການສົ່ງເສີມທັກສະຊີວິດທີ່ປະສົບຜົນສຳເລັດຂອງພວກເຮົາ. ໃນຈົດໝາຍຂ່າວສະບັບນີ້ ແມ່ນເພີ່ມເຕີມບົດຄວາມຈາກຫ້ອງການຂອງພວກເຮົາປະຈຳປະເທດກຳປູເຈຍ ແລະ ຄູ່ຮ່ວມພັດທະນາທີ່ຍາວນານໃນລະດັບພາກພື້ນຂອງພວກເຮົາ, ສະມາຄົມອາຊີໃຕ້ປາຊີຟິກສຳລັບການສຶກສາຂັ້ນພື້ນຖານ ແລະ ຜູ້ໃຫຍ່ (ASPBAE).

ຂໍຂອບໃຈສຳລັບການຮ່ວມມືອັນດີເລີດໃນຕະຫຼອດໄລຍະ 15 ປີ ທີ່ຜ່ານມາ ໂດຍສະເພາະຄູ່ຮ່ວມພັດທະນາໃນລາວ ແລະ ທີ່ຂາດບໍ່ໄດ້ ແມ່ນກະຊວງການຮ່ວມມື ແລະ ພັດທະນາເສດຖະກິດເຢຍລະມັນ (BMZ), ເຊິ່ງໄດ້ໃຫ້ການສະໜັບສະໜູນທຶນຫຼັກ, ນັບຕັ້ງແຕ່ການເລີ່ມຕົ້ນດຳເນີນງານໃນປະເທດຂອງພວກເຮົາ. ສຸດທ້າຍ, ຂ້າພະເຈົ້າຕ້ອງຂໍຂອບໃຈອະດີດຜູ້ອຳນວຍການປະຈຳພາກພື້ນທຸກທ່ານ ເຊິ່ງຖ້າປາດສະຈາກພວກເພິ່ນ ຄວາມສຳເລັດໃນປະຈຸບັນຄົງບໍ່ສາມາດເກີດຂຶ້ນໄດ້: ສ.ຈ ດຣ. Heribert Hinzen, Uwe Gartenschlaeger ແລະ ດຣ. Johann Heilmann.

ພວກເຮົາຫວັງວ່າຈະໄດ້ການຮ່ວມມືທີ່ປະສົບໝາກຜົນ ເພື່ອໂອກາດການຮຽນຮູ້ຫຼາຍຂຶ້ນ ແລະ ດີກວ່າໃນ ສປປ ລາວ.

ຂ້າພະເຈົ້າຂໍໃຫ້ທ່ານມີຄວາມສຸກໃນການອ່ານ.

ດ້ວຍຄວາມຮັກແພງ,

Christoph Jost

# ການຈັດຕັ້ງປະຕິບັດວຽກງານການຮຽນຮູ້ຕະຫຼອດຊີວິດໃນອາຊີຕາເວັນອອກສ່ຽງໃຕ້: *ການວິໄຈລະຫວ່າງປະເທດ*

*Christoph Jost*
DVV International, ລາວ

ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍ 4 (SDG 4) ຂອງວາລະ 2030 ຂອງສະຫະປະຊາຊາດ ໄດ້ວາງໄວ້ໃນຖະແຫຼງການພາລະກິດຂອງຕົນວ່າ ຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມກັນ ແລະ ທົ່ວເຖິງ ແລະ ສົ່ງເສີມ ກາລະໂອກາດໃນການຮຽນຮູ້ຕະຫຼອດຊີວິດ ສຳລັບໝົດທຸກຄົນ. ເກືອບໜຶ່ງທົດສະວັດພາຍຫຼັງການປະກາດ SDG 4, ໄດ້ຜ່ານຈຸດເຄິ່ງອາຍຸການຂອງວາລະ 2030, ຈະເຫັນໄດ້ວ່າການຮຽນຮູ້ຕະຫຼອດຊີວິດ (LLL) ໄດ້ຮັບແຮງຊຸກຍູ້ໃຫ້ຂັບເຄື່ອນຢູ່ໃນຫຼາຍປະເທດທົ່ວໂລກ. ໃນໄລຍະເວລານີ້ ບັນດານະໂຍບາຍ, ຍຸດທະສາດ, ກົດໝາຍ, ດຳລັດ ແລະ ຂອບການປະຕິບັດອື່ນໆ ໄດ້ຮັບການຮັບຮອງເອົາ. ໄດ້ມີການຈັດຕັ້ງກຸ່ມຜູ້ມີສ່ວນກ່ຽວຂ້ອງ ແລະ ເວທີປາໄສໃນລະດັບຊາດ, ພາກພື້ນ ແລະ ສາກົນ. ສະນັ້ນ, ຈຶ່ງມີຄວາມຄືບໜ້າອັນພົ້ນເດັ່ນກ່ຽວກັບກົນໄກສະເພາະຂອງປະເທດ ແລະ ພາກພື້ນໃນການເຈລະຈານະໂຍບາຍ, ການປະສານງານ, ການແລກປ່ຽນ ແລະ ການວາງແຜນ. ຄຽງຄູ່ກັນນັ້ນ, ການຮຽນຮູ້ຕະຫຼອດຊີວິດໂດຍທຳມະຊາດຮຽກຮ້ອງໃຫ້ມີການປຶກສາຫາລືຫຼາຍຝ່າຍ ແລະ ການປະສານງານລະຫວ່າງກະຊວງ. ດ້ວຍເຫດນັ້ນ, ສິ່ງທ້າທາຍໃໝ່ກໍ່ປະກົດຂຶ້ນກ່ຽວກັບການຍົກສູງຄວາມຮັບຮູ້ຂອງແຕ່ລະຂະແໜງການ, ກິດຈະກຳ ແລະ ແຜນການຝຶກອົບຮົມ ພ້ອມທັງການລາຍງານຮ່ວມກັນ.

ຄວາມຄືບໜ້າ ແລະ ສິ່ງທ້າທາຍໃນລະດັບນະໂຍບາຍ ນີ້ເປັນໂອກາດທີ່ດີສຳລັບການແລກປ່ຽນ ແລະ ຮຽນຮູ້ລະຫວ່າງປະເທດ, ເຊິ່ງຈຳເປັນຕ້ອງການໃຫ້ມີຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບວິທີຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດຢ່າງມີປະສິດທິຜົນ, ຫັນປ່ຽນຈາກນະໂຍບາຍໄປສູ່ສະຖາບັນ, ການສ້າງຂີດຄວາມສາມາດ ແລະ ການປະຕິບັດການຮຽນຮູ້ທີ່ເປັນຮູບປະທຳ. ຕໍ່ກັບປະຫວັດຄວາມເປັນມານີ້, ສະນັ້ນ, ໃນປີ 2024 ຫ້ອງການພາກພື້ນອາຊີຕາເວັນອອກສ່ຽງໃຕ້ຂອງ ດີວີວີ ອິນເຕີເນເຊີນແນວ ໄດ້ຈັດທຳການວິໄຈລະຫວ່າງປະເທດ ໂດຍການຮ່ວມມືກັບຄູ່ຮ່ວມການວິໄຈ:

- ຄະນະສຶກສາສາດ, ມະຫາວິທະຍາໄລຈຸລາລົງກອນ ທີ່ບາງກອກ ປະເທດໄທ
- ຄະນະສຶກສາສາດ ຈາກມະຫາວິທະຍາໄລແຫ່ງຊາດລາວ
- ສູນການຮຽນຮູ້ຕະຫຼອດຊີວິດຂອງພາກພື້ນ SEAMEO CELLL ໃນຫວຽດນາມ
- ຄະນະສຶກສາສາດຈາກມະຫາວິທະຍາໄລຫຼວງພະນົມເປັນ (RUPP), ປະເທດກຳປູເຈຍ

ຂໍ້ຕົກລົງໄດ້ຖືກສະຫຼຸບກັບຄູ່ຮ່ວມການວິໄຈທັງໝົດໃນຕົ້ນປີ 2024. ໃນລະຫວ່າງກອງປະຊຸມຄົ້ນຄ້ວາທີ່ດຳເນີນຢູ່ທີ່ຫ້ອງການຂອງ SEAMEO CELLL ໃນເດືອນກໍລະກົດ, ຄູ່ຮ່ວມງານທັງໝົດໄດ້ເຕົ້າໂຮມກັນເພື່ອປຶກສາຫາລືກ່ຽວກັບໂຄງຮ່າງການສຶກສາ, ກຳນົດຂອບເຂດຂອງການວິໄຈ ແລະ ໂຄງສ້າງທົ່ວໄປຂອງການວິໄຈ ທີ່ສຸມໃສ່ຄຳຖາມຄົ້ນຄ້ວາຕໍ່ໄປນີ້:

- ນະໂຍບາຍ ແລະ ຂອບເງື່ອນໄຂຂອງການຮຽນຮູ້ຕະຫຼອດຊີວິດໃດແດ່ທີ່ໄດ້ປະກົດຂຶ້ນນັບຕັ້ງແຕ່ການເຜີຍແຜ່ວາລະ 2030? ມີໂຄງສ້າງການຄຸ້ມຄອງ ແລະ ກົນໄກການປະສານງານຂ້າມຂະແໜງການໃດແດ່? ສິ່ງເຫຼົ່ານີ້ມີປະສິດທິພາບແນວໃດ ແລະ ຈະປັບປຸງວິທີການເຫຼົ່ານີ້ແນວໃດໃນອະນາຄົດ?
- ກົນໄກ ແລະ ຍຸດທະສາດໃດແດ່ທີ່ນຳໃຊ້ເພື່ອເອົາການຮຽນຮູ້ຕະຫຼອດຊີວິດໄປສູ່ການປະຕິບັດ ແລະ ບັນທຶກຄວາມຄືບໜ້າ? ມີສະຖາບັນ ແລະ ແຜນງານສ້າງຄວາມອາດສາມາດທີ່ກ່ຽວຂ້ອງກັບການຮຽນຮູ້ຕະຫຼອດຊີວິດບໍ່? ແນວທາງການປະຕິບັດທີ່ດີອັນໃດແດ່ (ຈາກຂະແໜງການຕ່າງໆ) ທີ່ຄວນຖືກແບ່ງປັນໃນວົງກວ້າງຂຶ້ນ?
- ການຮຽນຮູ້ຕະຫຼອດຊີວິດໄດ້ຮັບການສົ່ງເສີມ ແລະ ສື່ສານແນວໃດຕໍ່ກັບກະຊວງອື່ນໆ, ຜູ້ມີສ່ວນຮ່ວມຫຼັກ ແລະ ປະຊາຊົນໃນວົງກວ້າງ? ການສຶກສານອກໂຮງຮຽນ ແລະ ການສຶກສາຜູ້ໃຫຍ່ມີບົດບາດຫຍັງແດ່ຕໍ່ກັບການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ?

ໃນລະຫວ່າງກອງປະຊຸມຄົ້ນຄ້ວາວິໄຈ ພົບວ່າການດຳເນີນການ ແລະ ການປະຕິບັດກ່ຽວກັບການຮຽນຮູ້ຕະຫຼອດຊີວິດທີ່ເໝາະສົມສ່ວນໃຫຍ່ແມ່ນຍັງຈຳກັດໃນລະດັບນະໂຍບາຍ. ດັ່ງນັ້ນ, ຈຶ່ງໄດ້ຕົກລົງແບ່ງການສຶກສາອອກເປັນ 2 ພາກສ່ວນຕົ້ນຕໍຄື: ພາກທີໜຶ່ງກ່ຽວກັບເງື່ອນໄຂຂອງໂຄງຮ່າງການທີ່ມີຢູ່ແລ້ວ ແລະ ພົ້ນເດັ່ນ (ກົດໝາຍ, ດຳລັດ, ນະໂຍບາຍ ແລະ ອື່ນໆ) ແລະ ໂຄງສ້າງການຄຸ້ມຄອງທີ່ຈະກວມເອົາເນື້ອໃນບໍລິບົດຂອງການຮຽນຮູ້ຕະຫຼອດຊີວິດຫຼາຍຂຶ້ນ ໃນຂະນະທີ່ພາກທີສອງ ສ່ວນຫຼາຍແມ່ນສຸມໃສ່ໂຄງສ້າງການສຶກສານອກໂຮງຮຽນ, ໂຄງການ, ການລິເລີ່ມ ແລະ ການປະຕິບັດທີ່ດີທີ່ສຸດທີ່ສອດຄ່ອງກັນ.

ການສຶກສານີ້ຈະມີການຮ່າງຂຶ້ນຈົນເຖິງທ້າຍປີ 2024 ໃນຂະນະທີ່ການຮັບປະກັນຄຸນນະພາບ, ການພິມເຜີຍແຜ່ ແລະ ການເຜີຍແຜ່ແມ່ນໄດ້ກຳນົດໄວ້ໃນປີ 2025. ຫວັງວ່າການສຶກສາດັ່ງກ່າວຈະເປັນເຄື່ອງມືທີ່ເປັນປະໂຫຍດເພື່ອປູກຈິດສຳນຶກຫຼາຍຂຶ້ນກ່ຽວກັບຄວາມສຳຄັນຂອງການຮຽນຮູ້ຕະຫຼອດຊີວິດຕໍ່ກັບຜູ້ມີສ່ວນຮ່ວມຈາກທັງຂະແໜງການສຶກສາ ແລະ ຂະແໜງການອື່ນໆ.




ຄູ່ຮ່ວມງານຄົ້ນຄ້ວາໃນລະຫວ່າງກອງປະຊຸມເລີ່ມຕົ້ນທີ່ດຳເນີນຢູ່ໃນຫ້ອງການຂອງ SEAMEO CELLL

# ການປະເມີນລະບົບການສຶກສານອກໂຮງຮຽນ/ການຮຽນຮູ້ຜູ້ໃຫຍ່ ໃນ ສປປ ລາວ: *ແນວທາງການສ້າງລະບົບການຮຽນຮູ້ ແລະ ການສຶກສາສຳລັບຜູ້ໃຫຍ່*

## ບົດນຳ

ແນວທາງການສ້າງລະບົບການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່ (ALESBA) ແມ່ນໂຄງຮ່າງແນວຄວາມຄິດທີ່ດັ້ງເດີມພັດທະນາໂດຍຫ້ອງການດີວີວີ ອິນເຕີເນເຊີນແນວ ໃນອາຟຣິກາ ແລະ ໃນປະຈຸບັນໄດ້ກາຍເປັນເຄື່ອງມືການປະເມີນທີ່ໃຊ້ໃນອາຊີ. ALESBA ສາມາດໃຫ້ຄຳແນະນຳລັດຖະບານ, ປະຊາສັງຄົມ, ມະຫາວິທະຍາໄລ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆ ໃນວຽກງານທີ່ຊັບຊ້ອນໃນການຈັດຕັ້ງລະບົບການສຶກສາ ແລະ ການຮຽນຮູ້ຜູ້ໃຫຍ່ທີ່ມີປະສິດທິພາບ. ແນວທາງດັ່ງກ່າວພິຈາລະນາໂຄງສ້າງການປົກຄອງຂອງປະເທດໃດໜຶ່ງ ແລະ ວິເຄາະ 20 ອົງປະກອບຫຼັກ ຂອງການກໍ່ສ້າງລະບົບ ການສຶກສານອກໂຮງຮຽນ/ການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່ 4 ອົງປະກອບທີ່ສຳຄັນ: ການເຮັດໃຫ້ສະພາບແວດລ້ອມ, ການຈັດການສະຖາບັນ, ການຄຸ້ມຄອງ ແລະ ຂະບວນການດ້ານວິຊາການ. ຢູ່ໃນ ສປປ ລາວ, ຂະບວນການ ALESBA ໄດ້ຖືກລິເລີ່ມຂຶ້ນໂດຍຜ່ານກິດຈະກຳດັ່ງຕໍ່ໄປນີ້:

## ການສ້າງຄວາມອາດສາມາດສຳລັບຄູຝຶກຫຼັກ

ໂດຍຜ່ານກອງປະຊຸມສຳມະນາສາກົນ, ເປັນເຈົ້າພາບໂດຍ ດີວີວີອິນເຕີເນເຊີນແນວ ຫ້ອງການປະຈຳພາກພື້ນ ໃນປະເທດສີລັງກາ, ຜູ້ເຂົ້າຮ່ວມຈາກລາວ, ກຽກກິດສະຖານ (Kyrgyzstan), ຈໍແດນ (Jordan) ແລະ ສີລັງກາໄດ້ຮຽນຮູ້ກ່ຽວກັບແນວຄວາມຄິດຂອງ ALESBA ແລະ ມີສ່ວນຮ່ວມໃນການແລກປ່ຽນ ແລະ ຮຽນຮູ້ປະສົບການການຮຽນຮູ້ຢ່າງເຂັ້ມຂຸ້ນ ກ່ຽວກັບລະບົບການສຶກສານອກໂຮງຮຽນ/ການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່ ໃນປະເທດຂອງເຂົາເຈົ້າ. ການຝຶກອົບຮົມດັ່ງກ່າວໄດ້ຊ່ວຍໃຫ້ທີມງານຈາກລາວ (ຜູ້ຕາງໜ້າຈາກ ກົມການສຶກສານອກໂຮງຮຽນ, ຜູ້ບໍລິຫານໂຄງການຈາກ ດີວີວີ ອິນເຕີເນເຊີນແນວ ແລະ ທີ່ປຶກສາ) ທີ່ມີຄວາມຮູ້ ແລະ ທັກສະທີ່ຈຳເປັນເພື່ອນຳພາຂະບວນການ ALESBA ໃນ ສປປ ລາວ. ໃນລະຫວ່າງການຝຶກອົບຮົມ ຜູ້ເຂົ້າຮ່ວມຈາກມີສີ່ທີມຈາກແຕ່ລະປະເທດໄດ້ເຫັນການນຳສະເໜີ ALESBA ທຸກໂມດູນ ແລະ ໄດ້ເລີ່ມສ້າງເຄື່ອງມືການປະເມີນທົ່ວໄປມາປັບໃຊ້ໃຫ້ແທດເໝາະກັບສະພາບທ້ອງຖິ່ນຂອງພວກເຂົາ. ພາຍຫຼັງການຝຶກອົບຮົມທີ່ສີລັງກາ, ທີມງານຂອງລາວໄດ້ຮ່າງແຜນກິດຈະກຳ ALESBA ເພື່ອຂໍຄຳເຫັນຈາກກະຊວງສຶກສາທິການ ແລະ ກິລາ.

## ກອງປະຊຸມເພື່ອສ້າງຄວາມເຂົ້າໃຈຂອງ

ກອງປະຊຸມເພື່ອສ້າງຄວາມເຂົ້າໃຈແກ່ຜູ້ມີສ່ວນຮ່ວມ ການສຶກສານອກໂຮງຮຽນ/ການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່ ເຊິ່ງມີຜູ້ເຂົ້າຮ່ວມ 26 ຄົນ ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ ໄດ້ເລີ່ມຕົ້ນການປະຕິບັດ ALESBA ຢູ່ ສປປ ລາວ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອແນະນຳກອບແນວຄວາມຄິດຂອງ ALESBA ແລະ ເພື່ອສະແດງໃຫ້ເຫັນຂໍ້ດີຂອງກອບແນວຄວາມຄິດດັ່ງກ່າວໃນການຊີ້ນຳການປັບປຸງລະບົບການສຶກສານອກໂຮງຮຽນ/ການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່. ກອງປະຊຸມຄັ້ງນີ້ໄດ້ເປັນບາດກ້າວນຳໄປສູ່ການອະນຸມັດເພື່ອດຳເນີນການປະເມີນຜົນ ALESBA ໃນທຸກຂັ້ນຕອນ.




ທີມງານຜູ້ຊ່ຽວຊານຂອງລາວໃນການຝຶກອົບຮົມ ALESBA ທີ່ປະເທດສີລັງກາ



*ລຳພູນ ຫຼວງໄຊ*
*ກະຊວງສຶກສາທິການ ແລະ ກິລາ*

## ການຝຶກອົບຮົມການທົບທວນດ້ານວິຊາການ

ພາຍຫຼັງກອງປະຊຸມສ້າງຄວາມເຂົ້າໃຈແລ້ວ, ແມ່ນໄດ້ດຳເນີນຄັດເລືອກທີມປະເມີນ ສອງທີມ ໂດຍມີຕົວແທນຈາກພາກສ່ວນການສຶກສານອກໂຮງຮຽນ ຈາກຂັ້ນສູນກາງ, ຂັ້ນພາກ, ແຂວງ, ເມືອງ ແລະ ຊຸມຊົນ ທັງຈາກຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ. ທີມງານນີ້ໄດ້ເຂົ້າຮ່ວມການຝຶກອົບຮົມແບບຍືນຍົງເປັນເວລາ 3 ວັນຢູ່ວັງວຽງ ເພື່ອໃຫ້ເຂົາເຈົ້າມີຄວາມຮູ້ກ່ຽວກັບວິທີການ, ຂັ້ນຕອນ ແລະ ທັກສະທາງວິຊາການຂອງ ALESBA ໃນການດຳເນີນການທົບທວນໃນພາກສະໜາມ. ໃນລະຫວ່າງການຝຶກອົບຮົມ, ຜູ້ເຂົ້າຮ່ວມໄດ້ທົບທວນຄືນ ແລະ ສະຫຼຸບແບບສອບຖາມທີ່ທີມງານລາວກະກຽມ. ການຝຶກອົບຮົມຍັງໄດ້ຊ່ວຍໃຫ້ຜູ້ປະເມີນໂດຍຜູ້ເຂົ້າຮ່ວມທັງໝົດມີຄວາມເຂົ້າໃຈຢ່າງລະອຽດກ່ຽວກັບວິທີການສອບຖາມ ແລະ ປະມວນຜົນຂໍ້ມູນໂດຍໃຊ້ເຄື່ອງມືສະເພາະດ້ານ.

## ການທົບທວນດ້ານວິຊາການ ແລະ ການເກັບກຳຂໍ້ມູນ

ພາຍຫຼັງການຝຶກອົບຮົມການທົບທວນແລ້ວ ໄດ້ມີການດຳເນີນການໃນພາກສະໜາມເປັນເວລາ 5 ວັນ ເພື່ອເກັບກຳຂໍ້ມູນຢູ່ແຂວງວຽງຈັນ ແລະ ແຂວງຫຼວງພະບາງ. ທີມຜູ້ປະເມີນໂດຍມີສະມາຊິກ 6 ຄົນ, ປະກອບດ້ວຍຕົວແທນຈາກແຕ່ລະຂັ້ນຂອງໂຄງສ້າງການສຶກສານອກໂຮງຮຽນ, ໄດ້ພົບປະ ແລະ ແລກປ່ຽນກັບເພື່ອນຮ່ວມງານຈາກລະດັບດຽວກັນ (ເຊັ່ນ: ແຂວງ ຫາ ແຂວງ, ເມືອງ ຫາ ເມືອງ, ຊຸມຊົນ ຫາ ຊຸມຊົນ) ເພື່ອຫາຄຳຕອບສຳລັບແບບສອບຖາມຮ່ວມກັນ.

## ການພິຈາລະນາ, ການວິເຄາະຂໍ້ມູນ ແລະ ການເຜີຍແຜ່

ຂໍ້ມູນທັງໝົດທີ່ເກັບກຳໄດ້ໃນລະຫວ່າງການທົບທວນແມ່ນໄດ້ຖືກປະເມີນໂດຍທີມງານຈາກລາວ. ທີ່ປຶກສາໄດ້ອະທິບາຍບົດລາຍງານການປະເມີນທີ່ສອດຄ່ອງກັບໂຄງສ້າງ ແລະ ອົງປະກອບຫຼັກຂອງໂຄງຮ່າງ ALESBA. ຜົນໄດ້ຮັບໄດ້ຖືກນຳສະເໜີໃນກອງປະຊຸມສຳມະນາໃຫ້ຜູ້ມີສ່ວນກ່ຽວຂ້ອງປະມານ 40 ຄົນ. ຜູ້ເຂົ້າຮ່ວມໄດ້ປຶກສາຫາລືຜົນໄດ້ຮັບ ແລະ ຕົກລົງໃນຄ່າຄະແນນ (ຕັ້ງແຕ່ 1 ຫາ 5) ສຳລັບທັງໝົດ 20 ອົງປະກອບຫຼັກ ລະບົບການສຶກສານອກໂຮງຮຽນ/ການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່, ເຊິ່ງສາມາດສ້າງພາບລວມຂອງລະບົບທີ່ເຂົ້າໃຈງ່າຍ. ຂະບວນການ ALESBA ຈະສືບຕໍ່ດຳເນີນໃນປີຕໍ່ໄປ ເພື່ອປຶກສາຫາລື ແລະ ກຳນົດຂົງເຂດບູລິມະສິດໃນການປັບປຸງລະບົບ ການສຶກສານອກໂຮງຮຽນ/ການສຶກສາ ແລະ ການຮຽນຮູ້ຂອງຜູ້ໃຫຍ່ ຂອງ ສປປ ລາວ ໃນອະນາຄົດ.




ກອບແນວຄວາມຄິດ ການສ້າງລະບົບການຮຽນຮູ້ ແລະ ການສຶກສາສຳລັບຜູ້ໃຫຍ່

# ທັກສະຊີວິດສຳລັບຊາວໜຸ່ມ



*ດາລຸນນີ ສີລຸລາດ*
DVV International, ລາວ

ໃນໂລກປະຈຸບັນທີ່ມີການພັດທະນາ ແລະ ປ່ຽນແປງຢ່າງໄວວາບໍ່ວ່າຈະເປັນດ້ານເສດຖະກິດ-ສັງຄົມ, ສິ່ງຜົນໃຫ້ມີຫຼາຍສິ່ງຫຼາຍຢ່າງເກີດຂຶ້ນຢ່າງໄວວາ ແລະ ກວ້າງຂວາງ ທີ່ເກີດມາຈາກການການຂະຫຍາຍຕົວຂອງລະບົບເສດຖະກິດ. ຊາວໜຸ່ມປຽບໄດ້ວ່າເປັນກຳລັງສຳຄັນໃນການຂັບເຄື່ອນສັງຄົມ ແລະ ເສດຖະກິດ.

ເພື່ອເປັນການກຽມຄວາມພ້ອມສຳລັບຊາວໜຸ່ມກ່ອນເຂົ້າສູ່ສັງຄົມທີ່ມີການປ່ຽນແປງຕະຫຼອດເວລາ ໂດຍສະເພາະຊາວໜຸ່ມໃນຊັ້ນມັດທະຍົມຕອນປາຍ, ສ້າງໃຫ້ເຂົາເຈົ້າມີຄວາມເຂັ້ມແຂງ ທາງດ້ານຈິດໃຈ, ມີໄຫວພິບການເອົາຕົວລອດ, ມີການລະມັດລະວັງໃນການໃຊ້ຊີວິດ, ມີຄວາມຄິດການປະດິດສ້າງ ແລະ ມີການປັບຕົວເພື່ອຮັບມືກັບການປ່ຽນແປງ.




ກອບແນວຄວາມຄິດຂອງໂຄງການທັກສະຊີວິດ

ເພື່ອຕອບສະໜອງຕໍ່ການປ່ຽນແປງທາງສັງຄົມດັ່ງກ່າວມາຂ້າງເທິງ ດີວີວີ ອິນເຕີເນເຊີນແນວ ຮ່ວມມືກັບກົມພັດທະນາວິຊາຊີບ ຂອງສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ຮ່ວມກັນຈັດຕັ້ງປະຕິບັດໂຄງການຝຶກອົບຮົມທັກສະຊີວິດສຳລັບຊາວໜຸ່ມເພື່ອສ້າງຄວາມເຂັ້ມແຂງໃຫ້ເຂົາເຈົ້າໃນການຜະເຊີນໜ້າກັບໂລກກວ້າງ. ທັກສະຊີວິດເປັນການຈັດຂະບວນການຮຽນຮູ້ເພື່ອສົ່ງເສີມຄວາມສາມາດຂອງຊາວໜຸ່ມ ເພື່ອໃຫ້ສາມາດຈັດການກັບຕົນເອງ ແລະ ສິ່ງແວດລ້ອມເພື່ອໃຫ້ມີຄວາມສຸກ ແລະ ຄວາມປອດໄພໃນສັງຄົມ ເປັນການພັດທະນາທັກສະພື້ນຖານຂອງຊາວໜຸ່ມໂດຍການປະສົມປະສານເອົາຄວາມຮູ້ ແລະ ຂະບວນການຮຽນຮູ້ຕ່າງໆ ໃນຊີວິດປະຈຳວັນເຂົ້າກັນ.

ກິດຈະກຳສຳລັບໂຄງການທັກສະຊີວິດສຳລັບຊາວໜຸ່ມ ແມ່ນມີຫຼາຍກິດຈະກຳທີ່ແຕກຕ່າງກັນທີ່ເກາະກ່ຽວກັນ ເປັນຂະບວນການ, ກິດຈະກຳຫຼັກແມ່ນການຝຶກອົບຮົມທັກສະຊີວິດສຳລັບກຸ່ມຊາວໜຸ່ມເປົ້າໝາຍ ເຊິ່ງສ່ວຍຫຼາຍແມ່ນຊາວໜຸ່ມທີ່ກຳລັງຮຽນໃນຂັ້ນມັດທະຍົມຕອນປາຍ, ການຝຶກອົບຮົມໂດຍນຳໃຊ້ວິທີການຂອງການສຶກສາຜູ້ໃຫຍ່ ເພື່ອໃຫ້ຊາວໜຸ່ມເປົ້າໝາຍມີສ່ວນຮ່ວມໃຫ້ຫຼາຍທີ່ສຸດ, ກິດຈະກຳທີ່ສະທ້ອນໃຫ້ເຫັນບົດຮຽນ ຫຼື ສິ່ງທີ່ອາດຈະເກີດຂຶ້ນໃນອະນາຄົດ ພ້ອມທັງສອດແຊກບົດຮຽນ ແລະ ໃຫ້ຂໍ້ຄິດໃນການດຳລົງຊີວິດ.

ຄູຝຶກຊາວໜຸ່ມໃນຂັ້ນແຂວງ ໄດ້ຮັບການຝຶກອົບຮົມຄູຝຶກສະເພາະເຊິ່ງເຂົາເຈົ້າຈະເປັນຜູ້ດຳເນີນກິດຈະກຳກັບກຸ່ມຊາວໜຸ່ມເປົ້າໝາຍຕໍ່ໄປ, ໃນການຝຶກອົບຮົມຄູຝຶກນອກຈາກຈະໄດ້ຮຽນຮູ້ກ່ຽວກັບການດຳເນີນກິດຈະກຳ, ວິທີການ ແລະ ເຕັກນິກການຝຶກອົບຮົມແລ້ວ ເຂົາເຈົ້າຍັງໄດ້ຮູ້ຈັກການວິເຄາະກຸ່ມເປົ້າໝາຍໃນເຂດທ້ອງຖິ່ນຂອງຕົນ ວ່າມີຄວາມຕ້ອງການ ຫຼື ມີຫົວຂໍ້ໃດທີ່ຕ້ອງການແກ້ໄຂໃນທ້ອງຖິ່ນ ແລະ ເລືອກຫົວຂໍ້ດັ່ງກ່າວນັ້ນເປັນບູລິມະສິດຫຼັກໃນການຝຶກອົບຮົມກັບກຸ່ມເປົ້າໝາຍ.

ແຂວງຫຼວງນ້ຳທາ, ບໍ່ແກ້ວ, ຫຼວງພະບາງ, ຊຽງຂວາງ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ ແລະ ສາລະວັນ ບັນດາແຂວງເຫຼົ່ານີ້ແມ່ນແຂວງເປົ້າໝາຍຂອງໂຄງການ. ພາຍຫຼັງຝຶກອົບຮົມຄູຝຶກແລ້ວ ຄູຝຶກຊາວໜຸ່ມຂັ້ນແຂວງແມ່ນໄດ້ວາງແຜນການຝຶກອົບຮົມໃນແຂວງຂອງຕົນເອງໂດຍການສະໜັບສະໜູນຈາກທີມງານຄູຝຶກສະໜັບສະໜູນຈາກສູນກາງຊາວໜຸ່ມ ແລະ ຄູຝຶກຮັບເຊີນຈາກສູນການສຶກສານອກໂຮງຮຽນ.

ປັດໄຈສຳຄັນຢ່າງໜຶ່ງເພື່ອເຮັດໃຫ້ໂຄງການມີຄວາມອຸດົມສົມບູນ, ມີຄວາມຍືນຍົງ ແລະ ຄູຝຶກສາມາດດຳເນີນກິດຈະກຳຕໍ່ໄປໄດ້ຄື ປຶ້ມຄູ່ມືຝຶກອົບຮົມສຳລັບຄູຝຶກ ເຊິ່ງໄດ້ອີງໃສ່ຄວາມຕ້ອງການຂອງຄູຝຶກເປັນຫຼັກໃນການພັດທະນາປຶ້ມ. ໃນປຶ້ມຄູ່ມືເຫຼັ້ມນີ້ແມ່ນໄດ້ປະສົມປະສານທັງກິດຈະກຳ ແລະ ວິທີການອອກແບບກິດຈະກຳສຳລັບຝຶກອົບຮົມ ເນື້ອໃນເຂົ້າໃຈງ່າຍເໝາະສຳລັບຄູຝຶກໃໝ່ ແລະ ຄູຝຶກທີ່ມີປະສົບການແລ້ວ. ປຶ້ມຄູ່ມືນີ້ປະກອບມີ 4 ພາກຄື: ພາກຄວາມເຂົ້າໃຈເບື້ອງຕົ້ນກ່ຽວກັບທັກສະຊີວິດ, ພາກເນື້ອໃນ-ທິດສະດີກ່ຽວກັບທັກສະຊີວິດ, ພາກການອອກແບບກິດຈະກຳສຳລັບຄູຝຶກ ແລະ ພາກກິດຈະກຳທີ່ນຳໃຊ້ໃນການຝຶກອົບຮົມ.

ພາຍຫຼັງກິດຈະກຳຝຶກອົບຮົມກຸ່ມຊາວໜຸ່ມເປົ້າໝາຍ ກຸ່ມດັ່ງກ່າວໄດ້ສະເໜີເພີ່ມເຕີມຢາກໃຫ້ມີການຈັດຝຶກອົບຮົມອີກຄັ້ງໃຫ້ແກ່ລຸ້ນນ້ອງຕໍ່ໄປ ເນື່ອງຈາກເຫັນໄດ້ວ່າກິດຈະກຳແມ່ນໄດ້ມີການໃຫ້ຂໍ້ມູນ, ຄວາມຮູ້ໃນຫຼາຍດ້ານ ເຊັ່ນ: ສິ່ງທີ່ຈະເຮັດຕໍ່ໄປພາຍຫຼັງຮຽນຈົບ, ການມີສະຕິລະວັງຕົວ, ໄດ້ຂໍ້ຄິດໃນການດຳເນີນຊີວິດ, ຮູ້ຈັກວິທີສື່ສານທີ່ເໝາະສົມ, ຮູ້ຄຸນຄ່າຮູ້ວ່າຕົນເອງມີຄຸນຄ່າ ມີຈຸດຢືນເພື່ອບໍ່ໃຫ້ຖືກຕົວະຍົວະຫຼອກລວງ ເຊື່ອຄົນງ່າຍ ແລະ ອີກຫຼາຍຫົວຂໍ້. ສະນັ້ນ, ເຫັນໄດ້ວ່າກິດຈະກຳທັກສະຊີວິດມີຄວາມຈຳເປັນໃນຫຼາຍດ້ານເພື່ອກະກຽມເຂົາເຈົ້າເອງ ແລະ ຫວັງວ່າໂຄງການນີ້ຈະເປັນປະໂຫຍດແກ່ຄົນລຸ້ນນ້ອງຕໍ່ໄປ.

ໂຄງການນີ້ນອກຈາກສ້າງຄວາມຕະໜັກຮູ້ ແລະ ທັງເປັນການແນະນຳໃນການວາງແຜນພາຍຫຼັງຮຽນຈົບແລ້ວສຳລັບກຸ່ມຊາວໜຸ່ມເປົ້າໝາຍແລ້ວ ຍັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ຄູຝຶກໃນການວາງແຜນດຳເນີນກິດຈະກຳ ແລະ ຄູຝຶກຍັງໄດ້ຄົ້ນຄວ້າ ແລະ ຄົ້ນຄິດກິດຈະກຳອື່ນໆ ເຂົ້າມາເສີມເຊິ່ງນີ້ເປັນການພັດທະນາຄູຝຶກໄປໃນໂຕ ທັງເປັນການຊ່ວຍໃນການພັດທະນາຊັບພະຍາກອນມະນຸດທີ່ເລີ່ມແຕ່ການຮຽນຮູ້ຂັ້ນພື້ນຖານເພື່ອເປັນການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ.



ກິດຈະກຳກ່ຽວກັບປ້ອງກັນ ແລະ ຕ້ານຢາເສບຕິດ ສຳລັບນັກຮຽນມັດທະຍົມສຶກສາ

# Ed App: ເຄື່ອງມືດິຈິຕອນສຳລັບການສຶກສານອກໂຮງຮຽນ ໃນ ສປປ ລາວ



ປາກ້ລີ ໄຊຍະຊ້າງ
DVV International, ລາວ

Ed App ເປັນແອັບພລິເຄຊັນມືຖືສຳລັບການຮຽນ-ການສອນໃນລະບົບການສຶກສານອກໂຮງຮຽນ (ກສນ). ແອັບພລິເຄຊັນປະກອບມີເນື້ອຫາດິຈິຕອນ ພ້ອມທັງລົດຝຶກຫັດແບບໂຕ້ຕອບ ແລະ ສາມາດສ້າງສະຖິຕິທີ່ເປັນປະໂຫຍດໄດ້ເຊັ່ນ: ການບັນທຶກການມີສ່ວນຮ່ວມ, ຜົນໄດ້ຮັບ ແລະ ຄະແນນຂອງນັກຮຽນ. ແອັບດັ່ງກ່າວໄດ້ຖືກພັດທະນາຂຶ້ນໃນປີ 2022 ເພື່ອຕອບສະໜອງກັບສິ່ງທ້າທາຍທີ່ເກີດຈາກພະຍາດລະບາດໂຄວິດ-19, ເຊິ່ງເຮັດໃຫ້ໂຮງຮຽນສ່ວນຫຼາຍຖືກປິດຊົ່ວຄາວ ທັງໃນລາວ ແລະ ທົ່ວໂລກ. ການສຶກສາວິໄຈ 2 ບົດ ທີ່ໄດ້ດຳເນີນໂດຍການຮ່ວມມືກັບສູນພັດທະນາການສຶກສານອກໂຮງຮຽນ (ສພນ) ແລະ ດີວີວີ ອິນເຕີເນຊັນແນວ, ໄດ້ພິສູດໃຫ້ເຫັນທ່າແຮງ ແລະ ຄວາມເປັນໄປໄດ້ສຳລັບການຮຽນ-ການສອນອອນລາຍໃນລະບົບ ກສນ ໃນ ສປປ ລາວ. ຕັ້ງແຕ່ນັ້ນມາ, EdApp ໄດ້ຖືກພັດທະນາຢ່າງຕໍ່ເນື່ອງເພື່ອເປັນເຄື່ອງມືເສີມໃນການຮຽນ-ການສອນ ແລະ ການຮຽນຮູ້ ເຊິ່ງຍັງສາມາດອຳນວຍຄວາມສະດວກໃນການຮຽນຮູ້ຢູ່ໃນເຂດຫ່າງໄກສອກຫຼີກ.

ໃນເດືອນມິຖຸນາ 2024, ສພນ ໄດ້ຈັດກອງປະຊຸມຍຸດທະສາດ ທີ່ເມືອງວັງວຽງ ແຂວງວຽງຈັນ. ກອງປະຊຸມສຳມະນາສຳຄັນຄັ້ງນີ້ ມີຜູ້ເຂົ້າຮ່ວມຈາກບັນດາພະແນກການຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງແຜນງານການຈັດຕັ້ງປະຕິບັດ Ed App ແລະ ຂໍ້ອະນຸມັດຂະບວນການທົດລອງ. ແຜນງານທີ່ໄດ້ອອກແບບໄວ້ແມ່ນສະແດງໃຫ້ເຫັນການຄາດການທີ່ສຳຄັນດັ່ງຕໍ່ໄປນີ້:

1. ຫຼັກຖານຄັດເລືອກແຂວງເປົ້າໝາຍເພື່ອທົດລອງ
2. ການຝຶກອົບຮົມການຄຸ້ມຄອງ ແລະ ການປັບປຸງເນື້ອໃນ ຂອງ Ed App ໃຫ້ແກ່ພະນັກງານ ສພນ
3. ການຝຶກອົບຮົມຄູອາຈານ ກສນ ຂັ້ນແຂວງ ແລະ ນັກຮຽນ ກ່ຽວກັບ Ed App
4. ການກຳນົດຂັ້ນຕອນການຕິດຕາມ ແລະ ຕິດຕາມຜົນໄດ້ຮັບ
5. ການປະເມີນຜົນໄດ້ຮັບຈາກໂຄງການທົດລອງ
6. ການນຳສະເໜີຜົນການທົດລອງຕໍ່ກັບ ກົມການສຶກສານອກໂຮງຮຽນ ແລະ ກະຊວງສຶກສາທິການ ແລະ ກິລາ
7. ຂໍ້ຕົກລົງກ່ຽວກັບການນຳໃຊ້ຢ່າງເປັນທາງການຂອງ Ed App ໃນລະບົບ ກສນ




ເນື້ອໃນການຮຽນ-ການສອນຂອງ Ed App (ຊັ້ນ ມ 7)

ມາຮອດປະຈຸບັນ, ກົມການສຶກສານອກໂຮງຮຽນ, ສພນ ແລະ ດີວີວີ ໄດ້ພັດທະນາ ແລະ ເພີ່ມເນື້ອໃນ ດິຈິຕອນຂອງທັງໝົດເຂົ້າໃນ EdApp 10 ວິຊາ, ສຳລັບຊັ້ນມັດທະຍົມປີທີ 7 ໃນໂຄງການທຽບເທົ່າມັດທະຍົມ. ຍິ່ງໄປກວ່ານັ້ນ, ຄູ່ມືທີ່ສົມບູນແບບໄດ້ຖືກພັດທະນາຮ່ວມກັນໂດຍການສະໜັບສະໜູນຂອງຜູ້ຊ່ຽວຊານດ້ານການຮຽນຮູ້ດິຈິຕອນເພື່ອກະກຽມສຳລັບຂະບວນການທົດລອງທີ່ລຽບງ່າຍ. ສພນ ແລະ ດີວີວີ ຈະເລີ່ມຝຶກອົບຮົມຄູ (ຄູ້ມຄອງ) ໃນແຂວງເປົ້າໝາຍ ນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະ ອຸດົມໄຊ ໃນໄຕມາດທີ 4 ຂອງປີ 2024 ໂດຍມີນັກຮຽນຢ່າງໜ້ອຍ 100 ຄົນເປັນຜູ້ໃຊ້ແອັບ. ຫວັງວ່າຂະບວນການທົດລອງຈະດຳເນີນໄປດ້ວຍດີ ແລະ ໃນອະນາຄົດ Ed App ຈະເປັນປະໂຫຍດຕໍ່ຜູ້ຮຽນຫຼາຍ. ເງື່ອນໄຂເບື້ອງຕົ້ນທີ່ໄດ້ວາງໄວ້ກ່ອນຈະໄດ້ຮັບຜົນຈາກການທົດລອງທົດລອງ ແລະ ການອະນຸມັດຢ່າງເປັນທາງການຈາກກະຊວງສຶກສາ ແລະ ກິລາ ເຊິ່ງຄາດວ່າຈະໄດ້ໃນປີ 2025.



ການຝຶກອົບຮົມການທົດລອງກັບ Ed App ໃນແຂວງເປົ້າໝາຍ



*Vanna Peou*
DVV International, ກຳປູເຈຍ

# ການຫັນປ່ຽນສູນການຮຽນຮູ້ຊຸມຊົນ ແລະ ສູນຊາວໜຸ່ມເປັນສູນການຮຽນຮູ້ຕະຫຼອດຊີວິດ

ນະໂຍບາຍແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ ໄດ້ຮັບຮອງເອົາໃນວັນທີ 11 ກໍລະກົດ 2019 ໂດຍນາຍົກລັດຖະມົນຕີ ແຫ່ງລາຊະອານາຈັກກຳປູເຈຍ. ໃນປີ 2020, ຫ້ອງການ ດີວີວີ ອິນເຕີເນເຊິນແນວ ປະເທດກຳປູເຈຍ ໄດ້ພັດທະນາປຶ້ມຄູ່ມື ກ່ຽວກັບ ການຄຸ້ມຄອງ ແລະ ດຳເນີນງານສູນການຮຽນຮູ້ຕະຫຼອດຊີວິດ ໂດຍການຮ່ວມມືກັບກົມການສຶກສານອກໂຮງຮຽນ (ກສນ) ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເຊິ່ງມາຮອດທ້າຍປີນີ້ ໄດ້ສຳເລັດ ແລະ ເປີດຕົວຢ່າງເປັນທາງການ.

ໃນປະເທດກຳປູເຈຍ ປະຈຸບັນມີສູນການຮຽນຮູ້ຊຸມຊົນ (ສຮຊ) ຫຼາຍກວ່າ 300 ແຫ່ງ ໃນທົ່ວປະເທດ, ສ່ວນຫຼາຍເປີດໃຫ້ບໍລິການພຽງແຕ່ 4 ຫຼື 6 ເດືອນຕໍ່ປີ. ນອກຈາກນັ້ນ, ຍັງມີສູນຊາວໜຸ່ມ 16 ແຫ່ງໃນບັນດາແຂວງ, ເຊິ່ງມີກິດຈະກຳທີ່ຈຳກັດ ທີ່ດຶງດູດໄວໜຸ່ມເຂົ້າຮ່ວມຕະຫຼອດປີ.



ກອງປະຊຸມຍຸດທະສາດດ້ານຄວາມຍືນຍົງຂອງສູນການຮຽນຮູ້ຕະຫຼອດຊີວິດ ໃນກຳປູເຈຍ

ໂດຍເຫັນໄດ້ເຖິງທ່າແຮງຂອງ ສຮຊ ກໍ່ຄືຂອງສູນຊາວໜຸ່ມ ໃນການເປັນສະຖານທີ່ພົບປະກັນ ແລະ ການຮຽນຮູ້ທີ່ຄຶກຄື້ນສຳລັບຜູ້ໃຫຍ່, ຊາວໜຸ່ມ ແລະ ສະມາຊິກໃນຊຸມຊົນ, ດີວີວີ ອິນເຕີເນເຊິນແນວ ກຳປູເຈຍ ໄດ້ເຮັດວຽກຮ່ວມກັນກັບຄູ່ຮ່ວມງານເຊັ່ນ: ກສນ ແລະ ກົມຄຸ້ມຄອງຊາວໜຸ່ມ (Department of Youth Center Management) ເພື່ອຫັນປ່ຽນ ຫ້າ ສຮຊ ແລະ ຫ້າ ສູນໄວໜຸ່ມເປັນສູນການຮຽນຮູ້ຕະຫຼອດຊີວິດຕາມມາດຕະຖານທີ່ລະບຸໄວ້ໃນປຶ້ມຄູ່ມືດັ່ງກ່າວ. ຂໍ້ລິເລີ່ມນີ້ໄດ້ເລີ່ມຕົ້ນໃນໄລຍະໂຄງການສຸດທ້າຍ (2021-2023) ແລະ ປະຈຸບັນໄດ້ຖືກຂະຫຍາຍອອກຍ້ອນຜົນສຳເລັດອັນໃຫຍ່ຫຼວງ ແລະ ການສະໜັບສະໜູນທາງດ້ານການເມືອງຈາກລັດຖະບານກຳປູເຈຍ.

ຫ້ອງການ ດີວີວີ ອິນເຕີເນເຊິນແນວ ໃນປະເທດກຳປູເຈຍໄດ້ຈັດຕັ້ງທີມງານຄູຝຶກທີ່ມີທັກສະທີ່ຫຼາກຫຼາຍ ເພື່ອສະໜອງການສ້າງຄວາມອາດສາມາດໃນສິບສູນການຮຽນຮູ້ຕະຫຼອດຊີວິດ (LLLCs). ຄູຝຶກແມ່ນສະມາຊິກຊຸມຊົນທີ່ຮັບຮູ້ເຊັ່ນ: ຜູ້ກິນບຳນານ ແລະ ພະສົງ ຫຼື ພະນັກງານຈາກຄະນະສຶກສາສາດຂອງມະຫາວິທະຍາໄລພະນົມເປນ. ໂດຍທີມຄູຝຶກແຕ່ລະທ່ານແມ່ນມີໜ້າທີ່ຮັບຜິດຊອບທັກສະດັ່ງຕໍ່ໄປນີ້:

- ທັກສະການກະສິກຳ (ເຊັ່ນ: ການປູກຝັງ, ລ້ຽງສັດ)
- ທັກສະການໃຫ້ຄຳປຶກສາ
- ທັກສະດ້ານດີຈີຕ້ອນ ເຊິ່ງຈຳເປັນຫຼາຍໃນໄລຍະຂອງການລະບາດ Covid-19 ແຕ່ຍັງເປັນການສະໜັບສະໜູນ ແລະ ແລກປ່ຽນອອນລາຍຢ່າງຕໍ່ເນື່ອງ

## ຮູບແບບ ແລະ ຍຸດທະສາດການຈັດຕັ້ງປະຕິບັດ:

ດ້ວຍແຜນການເຮັດວຽກທີ່ຈະແຈ້ງ, ລະບຽບການພາຍໃນ, ຍຸດທະສາດທີ່ມີປະສິດທິຜົນ ແລະ ໂຄງການເຄື່ອນໄຫວໄດ້ຮັບການລະດົມຄົນຢ່າງງ່າຍດາຍເພື່ອມາມີສ່ວນຮ່ວມໃນຊຸມຊົນ. ກົນໄກຕິດຕາມ ແລະ ປະເມີນຜົນໄດ້ຮັບປະກັນຜົນໄດ້ຮັບໃນທັນທີ ແລະ ໄລຍະຍາວ.

## ນະວັດຕະກຳ, ຄວາມຄິດສ້າງສັນ, ຄວາມຍືນຍົງ

ໂຄງການ LLLCs ແມ່ນອີງໃສ່ການປະຕິບັດທີ່ສ້າງສັນເຊິ່ງສອດຄ່ອງກັບຄວາມຕ້ອງການຂອງຊຸມຊົນ. LLLCs ສ້າງແນວຄວາມຄິດສ້າງສັນເພື່ອນຳໃຊ້ຊັບພະຍາກອນທີ່ມີຢູ່. ດ້ວຍເຫດນີ້, LLLCs ທີ່ Sre Khnong ຈຶ່ງໄດ້ຖືກຮັບຮອງຢ່າງເປັນທາງການຈາກກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ ວ່າເປັນຕົວແບບ ແລະ ການປະຕິບັດທີ່ດີທີ່ສຸດຂອງ LLLCs ໃນກຳປູເຈຍໃນຕົ້ນປີ 2024. ໄດ້ມີການລວມ ສາມ LLLCs ເຂົ້າໃນແຜນການລົງທຶນຂອງບ້ານ (ເມືອງ Sangkat) ໃນປີ 2024. ເຊິ່ງຄູອາສາສະໝັກຈະໄດ້ຮັບເງິນອຸດໜູນປະຈຳເດືອນເທົ່າກັບຄູສອນເຕັມເວລາ. ນອກຈາກນັ້ນ, ນັກສຶກສາຈຳນວນຫຼາຍທີ່ໄດ້ຮັບການຝຶກອົບຮົມໃນສິບ LLLCs ໄດ້ກາຍເປັນເປັນທີ່ປຶກສາໃນຊຸມຊົນ, ຄູສອນພາສາອັງກິດ ຫຼື IT/ຄອມພິວເຕີຢູ່ໃນໂຮງຮຽນເອກະຊົນ ຫຼື ໄດ້ມີວຽກທີ່ມີຄ່າຕອບແທນດີໃນບໍລິສັດເອກະຊົນ.

ແຜນການຕິດຕາມຜົນໄລຍະໂຄງການໃນປະຈຸບັນ (2024-2026) ຄາດຄະເນວ່າຈະຂະຫຍາຍເຄືອຂ່າຍ LLLC, ສືບຕໍ່ການຝຶກອົບຮົມພະນັກງານທີ່ສອດຄ່ອງ ແລະ ເໝາະສົມກັບວິທີການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ ເຊັ່ນດຽວກັນກັບການຄຸ້ມຄອງອົງກອນ ແລະ ດ້ານການເງິນ. ຫຼັກສູດໄລຍະສັ້ນໂດຍອີງໃສ່ຄວາມຕ້ອງການຂອງປະຊາຊົນທ້ອງຖິ່ນແມ່ນໄດ້ຖືກພັດທະນາ ແລະ ປະຕິບັດຢູ່ໃນ LLLCs. ການປຶກສາຫາລືດ້ານນະໂຍບາຍກັບອົງການປົກຄອງທ້ອງຖິ່ນແມ່ນໝາຍເຖິງການເພີ່ມຈຳນວນ LLLCs ທີ່ລວມຢູ່ໃນແຜນການລົງທຶນຂອງຊຸມຊົນດັ່ງນັ້ນຈຶ່ງຮັບປະກັນຄວາມຍືນຍົງທາງດ້ານການເງິນຫຼາຍຂຶ້ນ.

# ການເຜີຍແຜ່ນະໂຍບາຍແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດໃນກຳປູເຈຍ



Phel Phearounou
ກະຊວງສຶກສາທິການ, ຊາວໜຸ່ມ ແລະ ກິລາ

ດີວີວີ ອິນເຕີເນເຊິນແນວ ປະຕິບັດຕາມແນວທາງໄລຍະຍາວ ແລະ ເປັນລະບົບ ໂດຍມີໂຄງການຕ່າງໆ ເພື່ອສະໜັບສະໜູນການສ້າງລະບົບການຮຽນ-ການສອນຂອງຜູ້ໃຫຍ່ຢ່າງມີປະສິດທິຜົນ. ການສະໜັບສະໜູນຢ່າງເປັນລະບົບ ແລະ ຂ້າມຂະແໜງການນີ້ປະກອບມີມາດຕະການເຊື່ອມຕໍ່ກັນໃນລະດັບມະຫາພາກ, ລະດັບກາງ ແລະ ຈຸລະພາກ. ຄຽງຄູ່ກັບການແບ່ງປັນນີ້, ບົດຄວາມນີ້ໄດ້ໃຫ້ນຳສະເໜີຄວາມເຂົ້າໃຈກ່ຽວກັບຂະບວນການຕໍ່ເນື່ອງຂອງນະໂຍບາຍການຮຽນຮູ້ຕະຫຼອດຊີວິດ (LLL) ແລະ ການເຄື່ອນໄຫວຂອງຕົນໃນປີ 2024.

ໃນລະດັບມະຫາພາກ, ນະໂຍບາຍການຮຽນຮູ້ຕະຫຼອດຊີວິດແຫ່ງຊາດຮ່ວມກັບ ດີວີວີ ອິນເຕີເນເຊິນແນວ ແລະ ໄດ້ຮັບຮອງເອົາໃນປີ 2019 ໄດ້ກາຍເປັນຂອບມາດຕະຖານສຳຄັນ. ໂດຍມີຈຸດປະສົງເພື່ອໃຫ້ບັນດາກະຊວງ, ຄູ່ຮ່ວມມືພັດທະນາ, ສະຖາບັນການຝຶກອົບຮົມ ແລະ ການສຶກສາ ແລະ ບັນດາຄູ່ຮ່ວມມືຈາກພາກລັດ ແລະ ເອກະຊົນ ເຂົ້າມາມີສ່ວນຮ່ວມ, ເວທີປາໄສແຫ່ງຊາດຄັ້ງທີ 1 ກ່ຽວກັບການຮຽນຮູ້ຕະຫຼອດຊີວິດໄດ້ຈັດຂຶ້ນໃນວັນທີ 28 ມີນາ 2024 ທີ່ນະຄອນຫຼວງພະນົມເປັນ ເພື່ອເພີ່ມຄວາມຮັບຮູ້ ແລະ ເພີ່ມທະວີຜົນກະທົບ ແລະ ການເຂົ້າເຖິງໃຫ້ສູງສຸດ. ເວທີດັ່ງກ່າວ ແມ່ນເນັ້ນຫາລືກ່ຽວກັບ ຄວາມຮ່ວມມືທີ່ກຳລັງດຳເນີນຢູ່ ແລະ ການດຳເນີນການທີ່ສຳຄັນສຳລັບການສະໜອງເຕັກໂນໂລຢີດິຈິຕອນ ເພື່ອໃຫ້ໂອກາດການຮຽນຮູ້ຕະຫຼອດຊີວິດສຳລັບທຸກຄົນ ແລະ ສົ່ງເສີມຍຸດທະສາດທີ່ສຳຄັນສຳລັບການຈັດຕັ້ງປະຕິບັດນະໂຍບາຍຕໍ່ໄປ. ໃນດ້ານການສົນທະນາທີ່ມີຫຼາຍຝ່າຍ, ກອງປະຊຸມໄດ້ລິເລີ່ມການເຈລະຈາລະຫວ່າງຜູ້ຕາງໜ້າຈາກຄະນະກຳມະການສຶກສາຕະຫຼອດຊີວິດແຫ່ງຊາດ(NCLLL) ແລະ ຜູ້ມີສ່ວນຮ່ວມທີ່ສຳຄັນຕື່ມອີກ.

ໃນອີກວາລະໜຶ່ງ, ກອງປະຊຸມປຶກສາຫາລືກ່ຽວກັບແຜນປະຕິບັດງານແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດໄດ້ຈັດຂຶ້ນໃນທ້າຍເດືອນກໍລະກົດ 2024. ຜູ້ຕາງຫນ້າຈາກ 40 ອົງການຈັດຕັ້ງໄດ້ເຕົ້າໂຮມກັນເພື່ອໃຫ້ຂໍ້ມູນປະກອບ ແລະ ກຳນົດເປົ້າໝາຍ, ຍຸດທະສາດ ແລະການປະຕິບັດທີ່ຕ້ອງການຈາກແຕ່ລະກະຊວງ ແລະ ຄູ່ຮ່ວມພັດທະນາຂອງ NCLLL. ພາຍຫຼັງກອງປະຊຸມສຳເລັດແລ້ວ, ຮ່າງແຜນດຳເນີນງານຄັ້ງສຸດທ້າຍໄດ້ຍື່ນໃຫ້ສະມາຊິກ NCLLL ຮັບຮອງໃນກອງປະຊຸມປະຈຳປີຂອງຄະນະກຳມະການ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ເປີດໂອກາດໃຫ້ບັນດາສະມາຊິກຂອງກອງເລຂາຂອງ LLL ໄດ້ປຶກສາຫາລືກ່ຽວກັບແນວຄວາມຄິດຂອງເມືອງການຮຽນຮູ້ຕະຫຼອດຊີວິດເພື່ອການຈັດຕັ້ງປະຕິບັດໃນກຳປູເຈຍ ແລະ ເຂົ້າຮ່ວມຂໍ້ລິເລີ່ມການຮຽນຮູ້ຕະຫຼອດຊີວິດຂອງອົງການຢູເນສໂກ.

ໃນລະດັບກາງ ຄວາມສາມາດດ້ານວິຊາຊີບຂອງ ສູນການຮຽນຮູ້ຕະຫຼອດຊີວິດ (LLLCs) ໄດ້ຖືກປັບປຸງຕື່ມອີກໃນເງື່ອນໄຂຂອງການຈັດຫຼັກສູດສຳລັບໄວໜຸ່ມ ແລະ ຜູ້ໃຫຍ່. ນອກຈາກການຝຶກອົບຮົມຄູ ແລະ ການພັດທະນາຊຸດອົບຮົມໄລຍະສັ້ນຕາມຄວາມຕ້ອງການຂອງຊຸມຊົນແລ້ວ ຍັງໄດ້ມີກອງປະຊຸມປຶກສາຫາລືເພື່ອສົມທົບກັບຊຸມຊົນທ້ອງຖິ່ນເພື່ອປະເມີນຄວາມຄືບໜ້າ ດ້ານຈຸດແຂງ, ຈຸດອ່ອນ, ສິ່ງທ້າທາຍ ແລະ ໂອກາດ ເພື່ອໂອກາດໃນການປັບປຸງການສະໜັບສະໜູນຊຸມຊົນ ແລະ ສູນການຮຽນຮູ້ຕະຫຼອດຊີວິດ. ຄວາມພະຍາຍາມເຫຼົ່ານີ້ມີຈຸດປະສົງເພື່ອແບ່ງປັນ ແລະ ບັນທຶກປະສົບການຜ່ານເອກະສານວິດີໂອ, ເຊິ່ງຕໍ່ມາສາມາດຮັບໃຊ້ເປັນຊັບພະຍາກອນທີ່ມີຄຸນຄ່າສຳລັບສູນການຮຽນຮູ້ຊຸມຊົນອື່ນໆ.

ໃນລະດັບຈຸລະພາກໄດ້ດຳເນີນການຮຽນຮູ້ທີ່ເປັນຮູບປະທຳ, ລວມທັງການປະກວດບົດຄວາມ. ໂດຍການຮ່ວມມືກັບມະຫາວິທະຍາໄລຫຼວງພະນົມເປັນ, ການແຂ່ງຂັນຮຽນຮູ້ຕະຫຼອດຊີວິດຄັ້ງທີ 3 ໄດ້ຈັດຂຶ້ນໂດຍສະເພາະເພື່ອຍົກສູງຄວາມຮັບຮູ້ກ່ຽວກັບນະໂຍບາຍແຫ່ງຊາດກ່ຽວກັບການຮຽນຮູ້ຕະຫຼອດຊີວິດຂອງນັກຮຽນມັດທະຍົມສຶກສາໃນທົ່ວປະເທດໃນເດືອນຕົ້ນປີ. ງານແຂ່ງຂັນປີ 2024 ໄດ້ຈັດຂຶ້ນພາຍໃຕ້ຫົວຂໍ້ ພັດທະນາທຶນມະນຸດແມ່ນເສັ້ນເລືອດໃຫຍ່ຂອງກຳປູເຈຍ ເພື່ອບັນລຸວິໄສທັດ 2030 ແລະ 2050. ມີນັກຮຽນເຂົ້າຮ່ວມຫຼາຍກວ່າ 330 ຄົນ, ເຮັດວຽກເປັນກຸ່ມສາມກຸ່ມ, ໃນຂະນະທີ່ບັນດາກຸ່ມທີ່ໄດ້ຮັບການຄັດເລືອກແມ່ນໄດ້ຮັບລາງວັນໃບຢັ້ງຢືນການຮັບຮູ້, ຫຼຽນກາ, ເຄື່ອງທີ່ລະນຶກ, ແລະອຸປະກອນການຮຽນອື່ນໆ.



ຄະນະຜູ້ແທນຂັ້ນສູງເຂົ້າຮ່ວມປະຊຸມກ່ຽວກັບນະໂຍບາຍແຫ່ງຊາດການຮຽນຮູ້ຕະຫຼອດຊີວິດຢູ່ກຳປູເຈຍ



*ເຫຼັກໄຫຼ ສຸດທະວີໄລ*
DVV International, ລາວ

# ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ: ການລິເລີ່ມສູນການຮຽນຮູ້ຊຸມຊົນຕົວແບບໃນລາວ

ກະຊວງສຶກສາທິການ ແລະ ກິລາ (ສສກ) ໃນ ສປປ ລາວ ມີການຮ່ວມມືອັນຍາວນານກັບອົງການຈັດຕັ້ງສາກົນ ເພື່ອສົ່ງເສີມໂອກາດການຮຽນຮູ້ຕະຫຼອດຊີວິດ. ຄໍາໝັ້ນສັນຍານີ້ໄດ້ສືບຕໍ່ດ້ວຍການເປີດຕົວສູນການຮຽນຮູ້ຊຸມຊົນຕົວແບບ, ໂຄງການທີ່ນໍາພາໂດຍ ກົມການສຶກສານອກໂຮງຮຽນ (ກສນ) ໂດຍການຮ່ວມມືກັບ ດີວີວີ ອິນເຕີເນເຊີນແນວ. ໃນຈົດໝາຍຂ່າວສະບັບນີ້ຈະໄດ້ນໍາສະເໜີກ່ຽວກັບການພັດທະນາສູນການຮຽນຮູ້ຊຸມຊົນ (ສຮຊ) ໃນລາວ ແລະ ຈຸດປະສົງຂອງ ໂຄງການລິເລີ່ມ ສຮຊ ຕົວແບບ ສໍາລັບໂຄງການໄລຍະໃໝ່ 2024-2026 ຂອງການຮ່ວມມື.

## ຄວາມເປັນມາ: ການເຕີບໂຕຂອງ ສຮຊ ໃນລາວ

ການເດີນທາງຂອງ CLCs ໃນລາວ ໄດ້ເລີ່ມຕົ້ນໃນປີ 1990 ດ້ວຍໂຄງການທົດລອງຢູ່ແຂວງຫຼວງນໍ້າທາ, ເຊິ່ງໄດ້ສຸມໃສ່ການຮູ້ໜັງສື ແລະ ການຝຶກອົບຮົມທັກສະວິຊາຊີບໃຫ້ແກ່ຊົນເຜົ່າ, ເດັກຍິງ ແລະ ແມ່ຍິງ. ໂຄງການນີ້ ຄວບຄູ່ໄປພ້ອມກັນກັບການສະໜັບສະໜູນຂອງອົງການຢູເນສໂກ ໃນວຽກງານ ກສນ, ໄດ້ເປັນການນໍາໄປສູ່ການສ້າງ ສຮຊ ສອງແຫ່ງທໍາອິດຢູ່ ແກ້ວກູ່ ແລະ ນາເມັກຊຸ້ມ ໃນປີ 1993.

ບັນດາສູນເບື້ອງຕົ້ນດັ່ງກ່າວນີ້ໄດ້ສະໜອງຫ້ອງຮຽນຮູ້ໜັງສືຂັ້ນພື້ນຖານ, ການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ແລະ ກິດຈະກໍາທີ່ຮັກສາຮີດຄອງປະເພນີວັດທະນະທໍາ. ຜົນກະທົບທາງບວກຕໍ່ຊີວິດຂອງຊາວບ້ານ ດັ່ງທີ່ໄດ້ລາຍງານໃນບົດວິໄຈ ໃນປີ 2004 ຂອງ ສສກ ເຮັດໃຫ້ລັດຖະບານນໍາສະເໜີ ສຮຊ ໃນທົ່ວປະເທດ. ມາຮອດເດືອນພະຈິກ 2016, ສຮຊ 317 ແຫ່ງ ໄດ້ຖືກສ້າງຕັ້ງຂຶ້ນ, ຕົ້ນຕໍແມ່ນໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງສາກົນ ແລະ ລັດຖະບານ. ປະຈຸບັນ ລັດທະບານມີໄດ້ລາຍຊື່ ແລະ ໃຫ້ການສະໜັບສະໜູນ ສຮຊ 128 ແຫ່ງ, ເນື່ອງຈາກ ສຮຊ ມີຈໍານວນຫຼວງຫຼາຍ ທີ່ມາພ້ອມກັບສິ່ງທ້າທາຍດ້ານຄວາມຍືນຍົງ ໂດຍອີງໃສ່ສະພາບເງື່ອນໄຂດ້ານຊັບພະຍາກອນຂອງລະບົບ ກສນ ຂອງລາວມີຈໍາກັດ.

## ວິໄສທັດສໍາລັບການຮຽນຮູ້ແບບຍືນຍົງ

ໂດຍຮັບຮູ້ເຖິງສິ່ງທ້າທາຍດ້ານຄວາມຍືນຍົງ, ການລິເລີ່ມ ສຮຊ ຕົວແບບໄດ້ເປີດຕົວໃນປີ 2024. ຂໍ້ລິເລີ່ມນີ້ສຸມໃສ່ການສ້າງ ສຮຊ ຕົວແບບໃນ 4 ແຂວງເປົ້າໝາຍຄື: ຫຼວງພະບາງ, ນະຄອນຫຼວງວຽງຈັນ, ວຽງຈັນ ແລະ ບໍລິຄໍາໄຊ.

## ການລິເລີ່ມຂອງ ສຮຊ ຕົວແບບ ມີວິທີການຫຼາຍຮູບແບບ

ປັບແນວທາງໃຫ້ສອດຄ່ອງກັບມາດຕະຖານການພັດທະນາ: ການລິເລີ່ມຮັບປະກັນວ່າ ສຮຊ ຕົວແບບ ປະຕິບັດຕາມມາດຕະຖານ ສສກ, ຮັບປະກັນຄຸນນະພາບການສຶກສາ ແລະ ການບໍລິການ.

ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ: ການລິເລີ່ມສົ່ງເສີມ ສຮຊ ທີ່ຂັບເຄື່ອນໂດຍຊຸມຊົນ, ຊຸກຍູ້ການມີສ່ວນຮ່ວມ ແລະຄວາມເປັນເຈົ້າການໃນທ້ອງຖິ່ນ. ສົ່ງເສີມຄວາມຮັບຜິດຊອບ ແລະ ຮັບປະກັນວ່າບັນດາສູນຕອບສະໜອງຄວາມຕ້ອງການສະເພາະຂອງຊຸມຊົນ, ນໍາໄປສູ່ຜົນໄດ້ຮັບໃນທາງບວກ.

ການລົງທຶນດ້ານບຸກຄະລາກອນ: ຂໍ້ລິເລີ່ມດັ່ງກ່າວໃຫ້ບຸລິມະສິດການພັດທະນາຂີດຄວາມສາມາດ. ໂຄງການຝຶກອົບຮົມໃຫ້ແກ່ພະນັກງານ ສຮຊ (ຜູ້ບໍລິຫານ, ຄູສອນ, ຜູ້ອໍານວຍຄວາມສະດວກ ແລະ ອາສາສະໝັກ) ເສີມຂະຫຍາຍທັກສະ ແລະ ປະສິດທິຜົນ ເພື່ອໃຫ້ເຂົາເຈົ້າສາມາດຮັບໃຊ້ຊຸມຊົນໄດ້ດີຂຶ້ນ.

ສະພາບແວດລ້ອມການຮຽນຮູ້ທີ່ທັນສະໄໝ: ເພື່ອສ້າງບັນຍາກາດການຮຽນຮູ້ທີ່ເອື້ອອໍານວຍ, ການລິເລີ່ມສະໜອງອຸປະກອນ ແລະ ສ້ອມແປງສິ່ງອໍານວຍຄວາມສະດວກ. ການລົງທຶນເຫຼົ່ານີ້ຮັບປະກັນໃຫ້



ກອງປະຊຸມເປີດໂຕໂຄງການສູນການຮຽນຮູ້ຊຸມຊົນຕົວແບບທີ່ແຂວງຫຼວງພະບາງ



ສູນການຮຽນຮູ້ຊຸມຊົນ ທີ່ບ້ານຫ້ອມ ແລະ ບ້ານທ່າໂພ

ສຮຊ ມີພື້ນທີ່ສະດວກສະບາຍ ແລະ ມີຄວາມພ້ອມທີ່ດີສໍາລັບການຮຽນຮູ້ ແລະ ການພັດທະນາທັກສະ.

ໂອກາດການຮຽນຮູ້ທີ່ເໝາະສົມ: ການຮັບຮູ້ຄວາມຕ້ອງການທີ່ຫຼາກຫຼາຍພາຍໃນຊຸມຊົນ, ໂຄງການລິເລີ່ມຈຶ່ງສະເໜີໃຫ້ບັນດາແຜນງານການຮຽນຮູ້ແບບຍືນຍົງ ແລະ ມີປະສິດທິພາບທີ່ອອກແບບມາສະເພາະສໍາລັບແມ່ຍິງ, ຜູ້ຊາຍ ແລະ ໄວໜຸ່ມ. ເພື່ອນຮັບປະກັນໃຫ້ທຸກຄົນມີໂອກາດທີ່ຈະໄດ້ຮັບຄວາມຮູ້ ແລະ ທັກສະທີ່ມີຄຸນຄ່າເພື່ອປັບປຸງຊີວິດຂອງເຂົາເຈົ້າ.

ການລິເລີ່ມດັ່ງກ່າວໄດ້ຊີ້ໃຫ້ເຫັນເຖິງຄວາມມຸ່ງໝັ້ນອັນບໍ່ຢຸດຢັ້ງຂອງລັດຖະບານລາວ ແລະ ດີວີວີ ອິນເຕີເນຊັນແນວ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນໂດຍຜ່ານ ສຮຊ. ສູນເຫຼົ່ານີ້ມີໜ້າທີ່ເປັນຕົວກະຕຸ້ນໃນການພັດທະນາຊຸມຊົນ ແລະ ການປ່ຽນແປງສັງຄົມໃນລາວ.

ການລິເລີ່ມຂອງ ສຮຊ ຕົວແບບ ເປັນຕົວແທນຂອງບົດໃໝ່ໃນການພັດທະນາ ສຮຊ ໃນລາວ. ໂດຍການແກ້ໄຂດ້ານຄວາມຍືນຍົງ ແລະ ສົ່ງເສີມຄວາມເປັນເຈົ້າການຊຸມຊົນ, ຂໍ້ລິເລີ່ມນີ້ມີທ່າແຮງທີ່ຈະສ້າງຜົນກະທົບອັນຍືນຍົງຕໍ່ຊີວິດຂອງປະຊາຊົນລາວ.

ຕົວເລກສູນການສຶກສານອກໂຮງຮຽນໃນ ສປປ ລາວ

| | |
|---|---|
| 1 | ສູນພັດທະນາການສຶກສານອກໂຮງຮຽນ |
| 2 | ສູນການສຶກສານອກໂຮງຮຽນຂັ້ນພາກ (ສູນພາກໃຕ້ ແລະ ສູນພາກເໜືອ) |
| 18 | ສູນການສຶກສານອກໂຮງຮຽນຂັ້ນແຂວງ |
| 45 | ສູນການສຶກສານອກໂຮງຮຽນຂັ້ນເມືອງ |
| 128 | ສູນການຮຽນຮູ້ຊຸມຊົນ |



Helen Dabu
ASPBAE

# ເລີ່ມຕົ້ນການສະເຫຼີມສະຫຼອງຄົບຮອບ 60 ປີ ທີ່ເນັ້ນໃສ່ການດຳເນີນການທີ່ສ້າງໃຫ້ເກີດການປ່ຽນແປງ ແລະ ເຊື່ອມໂຍງລະຫວ່າງລຸ້ນຄົນສຳລັບການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດໃນອາຊີປາຊີຟິກ

ສະມາຄົມອາຊີ-ປາຊີຟິກໃຕ້ເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່ (ASPBAE) ເຊື່ອວ່າການສຶກສາ - ລວມທັງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ - ເປັນສິດທິພື້ນຖານຂອງມະນຸດ. ໂດຍເຊື່ອໃນການປ່ຽນແປງຂອງການສຶກສາເພື່ອສ້າງອະນາຄົດທີ່ຍຸຕິທຳ, ສັນຕິ ແລະ ຍືນຍົງ.

ASPBAE ເຮັດວຽກຢ່າງໃກ້ຊິດກັບບັນດາສະມາຊິກໃນພາກພື້ນອາຊີປາຊີຟິກ ແລະ ບັນດາຄູ່ຮ່ວມພັດທະນາໃນທຸກລະດັບ, ລວມທັງ ດີວີວີ ອິນເຕີເນຊັນແນວ, ໂດຍມຸ່ງໝັ້ນສືບຕໍ່ປະຕິບັດການຫັນປ່ຽນ ແລະ ປ່ຽນແປງໃໝ່ ເພື່ອໃຫ້ລັດຖະບານມີຄວາມຮັບຜິດຊອບໃນການເຮັດໃຫ້ການສຶກສາສາມາດເຂົ້າເຖິງໄດ້, ຍອມຮັບໄດ້ ແລະ ປັບປ່ຽນໄດ້ - ປາດສະຈາກການກີດກັນ, ຈຳແນກ ແລະ ເລືອກປະຕິບັດທຸກຮູບແບບ. ນັບຕັ້ງແຕ່ການສ້າງຕັ້ງໃນປີ 1964, ASPBAE ຍັງສືບຕໍ່ສົ່ງເສີມ ແລະ ປົກປ້ອງສິດທິຂອງທຸກຄົນໃນການຮຽນຮູ້ ແລະ ເຂົ້າເຖິງການສຶກສາທີ່ກ່ຽວຂ້ອງ ແລະ ຄຸນນະພາບ ຢ່າງເທົ່າທຽມ, ສົ່ງເສີມຄວາມຍຸຕິທຳທາງເພດ, ອະນາຄົດທີ່ຍືນຍົງ ແລະ ກາລະໂອກາດການຮຽນຮູ້ຕະຫຼອດຊີວິດຂອງເຂົາເຈົ້າ.

ການສະເຫຼີມສະຫຼອງຄົບຮອບ 60 ປີໃນປີ 2024, ASPBAE ໄດ້ຈັດກິດຈະກຳສະເຫຼີມສະຫຼອງປີດັ່ງກ່າວດ້ວຍກອງປະຊຸມນະໂຍບາຍການສຶກສາລະດັບພາກພື້ນທີ່ເມືອງ Ulaanbaatar, ປະເທດມົງໂກເລຍ ໃນວັນທີ 20 ມີນາ, ໂດຍການຮ່ວມມືກັບບັນດາສະມາຊິກ, ທັງໝົດເພື່ອການສຶກສາ ຄູ່ຮ່ວມພັດທະນາພາກປະຊາສັງຄົມໃນມົງໂກເລຍ (AFE) ໂດຍມີຈຸດປະສົງດັ່ງຕໍ່ໄປນີ້:

- ຈັດໃຫ້ມີເວທີການສ້າງຄວາມອາດສາມາດ, ການຮຽນຮູ້ ແລະ ແລກປ່ຽນກ່ຽວກັບການປະຕິບັດໂຄງຮ່າງນະໂຍບາຍຫັນປ່ຽນດ້ານການສຶກສາ ແລະ ວາລະທີ່ກ່ຽວຂ້ອງເຖິງຄວາມຍຸຕິທຳລະຫວ່າງຍິງ-ຊາຍ, ສະພາບອາກາດ ແລະ ສິດທິຂ້າມລຸ້ນ ແລະ ການສືບທະນາ;
- ວິເຄາະລົງເລິກກ່ຽວກັບບັນຫາລະຫວ່າງລຸ້ນຄົນໃນດ້ານການສຶກສາ, ລວມທັງການຮຽນຮູ້ ແລະ ການສຶກສາຂອງໄວໜຸ່ມ ແລະ ຜູ້ໃຫຍ່ (ALE), ໂດຍອີງໃສ່ສະພາບຄວາມເປັນຈິງຂອງສະພາບການໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ພາກພື້ນ ແລະ ຄຳນຶງເຖິງການສຶກສາ ແລະ ຄຳໝັ້ນສັນຍາການພັດທະນາຂອງລັດຖະບານໃນອາຊີປາຊີຟິກ ແລະ;
- ສະທ້ອນຄືນ ແລະ ສະເຫຼີມສະຫຼອງ 60 ປີຂອງ ASPBAE ຂອງການປະຕິບັດການປ່ຽນແປງ ແລະ ການຫັນປ່ຽນລະຫວ່າງລຸ້ນຄົນ ສຳລັບການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ.

ກອງປະຊຸມນະໂຍບາຍນີ້ ມີຜູ້ເຂົ້າຮ່ວມຫຼາຍກວ່າ 100 ຄົນ. ໃນນີ້ລວມມີສະມາຊິກ ASPBAE ແລະ AFE ແລະ ຄູ່ຮ່ວມພັດທະນາໃນມົງໂກເລຍ, ຜູ້ຕາງໜ້າລັດຖະບານມົງໂກລີ, ສະມາຊິກສະພາບໍລິຫານຂອງ ASPBAE ແລະ ພະນັກງານຈາກ 14 ປະເທດ ແລະ 5 ອະນຸພາກພື້ນອາຊີປາຊີຟິກ, ແລະ ຜູ້ອຳນວຍການພາກພື້ນທ້ອງການດີວີວີ ປະຈຳພາກພື້ນອາຊີຕາເວັນອອກສຽງໃຕ້, ທ່ານ Christoph Jost.




ປະທານສະມາຄົມ ASPBAE ແບ່ງປັນໃນກອງປະຊຸມກ່ຽວກັບ ການປະຕິບັດການປ່ຽນແປງເພື່ອຄວາມຍຸຕິທຳທາງເພດ ແລະ ຜ່ານການສຶກສາ



ຜູ້ເຂົ້າຮ່ວມມີຄວາມມ່ວນຊື່ນໃນການເຮັດກິດຈະກຳໃນກອງປະຊຸມ

ກອງປະຊຸມກ່ຽວກັບ ALE ປະກອບມີສອງພາກສ່ວນທີ່ກວມເອົາຂອບນະໂຍບາຍແຫ່ງຊາດ ພ້ອມທັງປະສົບການໃນລະດັບປະເທດ ແລະ ການມີສ່ວນຮ່ວມໃນການປະຕິບັດວາລະ ALE ໃນລະດັບທ້ອງຖິ່ນ ແລະ ລະດັບຊາດ.

ຂໍ້ສະເໜີແນະ ແລະ ການຢັ້ງຢືນນະໂຍບາຍທີ່ສຳຄັນໃນກອງປະຊຸມ ສະແດງໃຫ້ເຫັນບັນດາຂົງເຂດທີ່ສຳຄັນທີ່ໄດ້ຕົກລົງໃນຂອບການປະຕິບັດ Marrakech (MFA) ກ່ຽວກັບ ALE ລວມມີດັ່ງຕໍ່ໄປນີ້:

ຄວາມມຸ່ງໝັ້ນຢ່າງແຮງກ້າເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ປີ 2030 ແລະ ຮັບຮູ້ວ່າການຮຽນຮູ້ຕະຫຼອດຊີວິດແມ່ນສຳຄັນຕໍ່ກັບ 17 ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຮຽນຮູ້ຕະຫຼອດຊີວິດ ເຊິ່ງມີ ALE ແມ່ນກຸນແຈສຳຄັນ;

ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ການຫັນປ່ຽນບົດບາດຍິງ-ຊາຍຈະຕ້ອງມີລັກສະນະອົງລວມ, ເປັນເອກະພາບ ແລະ ຮອບດ້ານ, ໂດຍເຕົ້າໂຮມບັນດານັກສຶກສາທີ່ມາຈາກຂະແໜງການຕ່າງໆ ເຊັ່ນ: ສາທາລະນະສຸກ, ການປົກປ້ອງ ແລະ ຍຸຕິທຳເຂົ້າກັນ.

ຮັບຮອງເອົາຄຳແນະນຳກ່ຽວກັບການຮຽນຮູ້ ແລະ ການສຶກສາຂອງຜູ້ໃຫຍ່ (RALE), ຮັບຮອງເອົາໂດຍກອງປະຊຸມໃຫຍ່ຂອງອົງການ UNESCO ໃນປີ 2015, ລວມທັງຄຳນິຍາມຂອງ ALE ແລະ ການກຳນົດສາມຂົງເຂດການຮຽນຮູ້ຫຼັກຄື: ການຮູ້ໜັງສື ແລະ ທັກສະພື້ນຖານ; ການສຶກສາຕໍ່ເນື່ອງ ແລະ ທັກສະວິຊາຊີບ; ແລະ ເສລີພາບ, ຄວາມນິຍົມ ແລະ ການສຶກສາຊຸມຊົນ ແລະ ທັກສະການເປັນພົນລະເມືອງ.

ຢືນຢັນຢ່າງໜັກແໜ້ນວ່າການສຶກສາ, ລວມທັງ ALE ເປັນສິດທິມະນຸດພື້ນຖານ - ຄຳໝັ້ນສັນຍາທີ່ມີຄວາມສຳຄັນໃນການທຳຄວາມເຂົ້າໃຈ ແລະ ກຳນົດຂອບການສຶກສາໃຫ້ເປັນຄວາມພະຍາຍາມສາທາລະນະ ແລະ ຜົນປະໂຫຍດຮ່ວມກັນ - ຕາມທີ່ຄະນະກຳມະການສາກົນກ່ຽວກັບອະນາຄົດຂອງການສຶກສາ.

ການຮຽນຮູ້ຂອງຊຸມຊົນ ແລະ ການສຶກສາເພື່ອພົນລະເມືອງ ແມ່ນປັດໄຈຫຼັກຂອງການພັດທະນາແບບຍືນຍົງ ລວມທັງການພັດທະນາຊົນນະບົດ ແລະ ການປູກຈິດສຳນຶກຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ຍິ່ງໄປກວ່ານັ້ນ, ສະຖາບັນ ALE ເອງສາມາດເຮັດເປັນຕົວແບບສຳລັບການຫັນປ່ຽນໃນສັງຄົມໂດຍການເຮັດໃຫ້ຫຼັກສູດ, ສິ່ງອຳນວຍຄວາມສະດວກ ແລະ ການຄຸ້ມຄອງໃຫ້ສອດຄ່ອງກັບການຮັກສາສິ່ງແວດລ້ອມ.

ສຸດທ້າຍ, ໃນການກອງປະຊຸມແລກປ່ຽນປະສົບການ ກ່ຽວກັບ ALE ໃນລະດັບຊາດ ໂດຍຜູ້ເຂົ້າຮ່ວມຈາກບັງກະລາເທດ, ຫວຽດນາມ ແລະ ມົງໂກເລຍ, ເຊິ່ງໄດ້ເນັ້ນໜັກໃສ່ຂົງເຂດທີ່ສຳຄັນໃນການດຳເນີນກອງປະຊຸມ ALE ທີ່ກວ້າງຂຶ້ນເຊັ່ນການປັບປຸງຄຸນນະພາບ, ການເພີ່ມງົບປະມານ, ການຮັບປະກັນວ່າມີການລວມເຂົ້າກັນ ແລະ ການປັບປຸງຂໍ້ມູນ, ການຕິດຕາມ ແລະ ການຮ່ວມມື. ພວກເຂົາເຈົ້າຍັງໄດ້ແບ່ງປັນຂະບວນການມີສ່ວນຮ່ວມເພື່ອປັບປຸງບໍ່ພຽງແຕ່ນະໂຍບາຍ ALE ເທົ່ານັ້ນ, ແຕ່ຍັງເປັນການຈັດສິ່ງໂຄງການ ALE ທີ່ກ່ຽວຂ້ອງກັບຜູ້ອອກແບບໂຄງການ ALE ຈາກລັດຖະບານ, ຄູສອນ ແລະ ຄູຝຶກ, ຜູ້ຮຽນແລະ ອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກໃນການປະຕິບັດ ແລະ ການສົ່ງເສີມ ALE.

ກອງປະຊຸມໄດ້ປິດລົງດ້ວຍຂໍ້ຄວາມສະເຫຼີມສະຫຼອງຄົບຮອບ 60 ປີ ແລະ ການກິດຈະກຳທີ່ເນັ້ນໃສ່ບົດບາດຂອງ ASPBAE ໃນການຮັກສາສຽງຂອງອົງການຈັດຕັ້ງທາງສັງຄົມທີ່ເຂັ້ມແຂງ ໃນການສົ່ງເສີມສິດທິດ້ານການສຶກສາ ແລະ ຄວາມຕ້ອງກາການຮຽນຮູ້ຂອງທຸກຄົນ, ໂດຍສະເພາະເດັກນ້ອຍ, ໄວໜຸ່ມ ແລະ ຜູ້ໃຫຍ່ທີ່ດ້ອຍໂອກາດ ແລະ ກຸ່ມທີ່ມີຄວາມສ່ຽງ.

# ແຜນປະຕິບັດງານແຫ່ງຊາດ ເພື່ອການຮຽນຮູ້ ຕະຫຼອດຊີວິດ ຢູ່ ສປປ ລາວ



ມານະ ຈັນທະລານິນ
DVV International, ລາວ

ແຜນປະຕິບັດງານແຫ່ງຊາດສໍາລັບການຮຽນຮູ້ຕະຫຼອດຊີວິດ ແມ່ນເອກະສານຍຸດທະສາດທີ່ສົມບູນແບບທີ່ມີຈຸດປະສົງ ເພື່ອຕອບສະໜອງຄວາມຕ້ອງການການຮຽນຮູ້ທີ່ຫຼາກຫຼາຍຂອງບຸກຄົນໃນທົ່ວທຸກຊ່ວງໄລຍະຂອງຊີວິດ. ແຜນປະຕິບັດງານນີ້ໄດ້ຮັບຮູ້ເຖິງຄວາມສໍາຄັນຂອງການຮຽນຮູ້ຕະຫຼອດຊີວິດເພື່ອພັດທະນາບຸກຄະລາກອນ ແລະ ວິຊາຊີບຂອງບຸກຄົນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດໂດຍລວມ. ຂອບຂອງແຜນປະຕິບັດງານປະກອບມີການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໃສ ພ້ອມທັງການຮຽນຮູ້ໃນບ່ອນເຮັດວຽກ ແລະ ກວມເອົາທຸກລະດັບການສຶກສາ, ຕັ້ງແຕ່ໄວເດັກຈົນເຖິງການຮຽນຮູ້ຂອງຜູ້ໃຫຍ່. ວິທີການດັ່ງກ່າວນີ້ເພື່ອຮັບປະກັນວ່າບໍ່ມີບຸກຄົນໃດຖືກປະໄວ້ທາງຫຼັງ ແລະ ທຸກຄົນສາມາດເຂົ້າເຖິງໂອກາດການຮຽນຮູ້ທີ່ກ່ຽວຂ້ອງ ແລະ ມີຄຸນນະພາບສູງ.

ນັບແຕ່ໄດ້ຮັບຮອງເອົາດໍາລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດແຫ່ງຊາດໃນປີ 2020 ເປັນຕົ້ນມາ, ໄດ້ມີການເຊື່ອມໂຍງການຮຽນຮູ້ຕະຫຼອດຊີວິດເຂົ້າໃນກິດຈະກໍາທີ່ມີຢູ່ແລ້ວ. ການເຊື່ອມໂຍງນີ້ບໍ່ພຽງແຕ່ກວມເອົາການຊ່ວຍເຫຼືອດ້ານການສຶກສາສໍາລັບເດັກນ້ອຍທີ່ດ້ອຍໂອກາດ ແລະ ກຸ່ມທີ່ມີຄວາມສ່ຽງເທົ່ານັ້ນ, ແຕ່ຍັງເປັນການຍົກລະດັບທັກສະ ແລະ ຄວາມຮູ້ໃນກຸ່ມບຸກຄະລາກອນ ແລະ ນັກການສຶກສາໃນຂອບເຂດຂອງການຮຽນຮູ້ຕະຫຼອດຊີວິດ. ນອກຈາກນັ້ນ, ຂໍ້ລິເລີ່ມນີ້ລວມມີການພັດທະນາວິຊາຊີບດ້ານຕ່າງໆ ແລະ ມາດຕະການຝຶກອົບຮົມວິຊາຊີບຂັ້ນພື້ນຖານ.

ເມື່ອພິຈາລະນາເບິ່ງພາບລວມຂອງການຮຽນຮູ້ຕະຫຼອດຊີວິດໃນປະເທດລາວໃນປະຈຸບັນ, ເຫັນໄດ້ວ່າມາຮອດປັດຈຸບັນຂະແໜງການສຶກສາ ແລະ ກິລາ ສ່ວນຫຼາຍໄດ້ມີມາດຕະການຢ່າງຈິງຈັງ ເພື່ອເສີມສ້າງກິດຈະກໍາການຮຽນຮູ້ຕະຫຼອດຊີວິດ ໂດຍການລວມເອົາການຮຽນຮູ້ຕະຫຼອດຊີວິດໃນດ້ານຄວາມ ເຂົ້າກັບພາກະຕິບັດຕົວຈິງ. ໃນອະນາຄົດ, ມັນເປັນສິ່ງຈໍາເປັນທີ່ຈະສ້າງການເຊື່ອມໂຍງທີ່ເຂັ້ມແຂງລະຫວ່າງທຸກກະຊວງທີ່ກ່ຽວຂ້ອງກັບວິຊາການ ແລະ ຄະນະກໍາມະການລະດັບສູງແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ. ນີ້ແມ່ນສິ່ງສໍາຄັນຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP). ດັ່ງນັ້ນ, ແຜນປະຕິບັດງານແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດໄດ້ຖືກສ້າງຂຶ້ນເພື່ອໃຫ້ຄໍາແນະນໍາແກ່ບັນດາກະຊວງ, ພາກສ່ວນກ່ຽວຂ້ອງ ແລະ ເພື່ອການຕິດຕາມການຈັດຕັ້ງປະຕິບັດ.

ພາຍຫຼັງການຮ່າງແຜນ, ກອງປະຊຸມປຶກສາຫາລື ແລະ ກອດກາຄົນຕ່າງໆກັບບັນດາພາກສ່ວນທີ່ກ່ຽວຂ້ອງຈາກທຸກກະຊວງ ແລະ ອົງການສຶກສາຂັ້ນແຂວງທີ່ໄດ້ດໍາເນີນໃນປີ 2023 ແລະ 2024. ຂະບວນການນີ້ແມ່ນມີຄວາມສໍາຄັນ ເພື່ອຮັບປະກັນໃຫ້ແຜນດໍາເນີນງານສອດຄ່ອງກັບແຜນພັດທະນາຂອງແຕ່ລະຂະແໜງ. ແຜນປະຕິບັດງານເພື່ອການຮຽນຮູ້ຕະຫຼອດຊີວິດສະບັບສຸດທ້າຍໄດ້ຍື່ນສະເໜີຕໍ່ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ, ເຊິ່ງເປັນປະທານຄະນະຊີ້ນໍາລະດັບສູງ ເຊິ່ງສະມາຊິກສ່ວນຫຼາຍແມ່ນຮອງລັດຖະມົນຕີຈາກເກືອບທຸກກະຊວງ ແລະ ອົງການຈັດຕັ້ງມະຫາຊົນໃນ ສປປ ລາວ. ຫວັງວ່າຄະນະຊີ້ນໍາຂັ້ນສູງຄັ້ງທໍາອິດຈະດໍາເນີນກ່ອນທ້າຍປີ 2024 ເພື່ອຮັບຮອງເອົາແຜນການດໍາເນີນງານຢ່າງເປັນທາງການ ແລະ ສືບຕໍ່ເຜີຍແຜ່, ເພີ່ມຄວາມຮັບຮູ້ ແລະ ປະຕິບັດຢ່າງເໝາະສົມກັບບັນດາກະຊວງທີ່ກ່ຽວຂ້ອງໃນປະເທດ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດສໍາລັບການຮຽນຮູ້ຕະຫຼອດຊີວິດ ໄປຕາມແຜນການທີ່ວາງໄວ້, ການຮ່ວມມືທີ່ເປັນທາງການ ລະຫວ່າງບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງແມ່ນເປັນສິ່ງສໍາຄັນ. ຂະບວນການພັດທະນາແຜນປະຕິບັດງານເພີ່ມເຕີມຍັງຮຽກຮ້ອງໃຫ້ມີການສື່ສານຢ່າງຈະແຈ້ງ, ຄໍາຄິດເຫັນ ແລະ ຂໍ້ມູນປະກອບຈາກທຸກພາກສ່ວນກ່ຽວຂ້ອງເພື່ອສົ່ງເສີມຄວາມເປັນເຈົ້າການ ແລະ ຄໍາໝັ້ນສັນຍາ. ວິທີການຮ່ວມມືນີ້ຈະຊ່ວຍກໍານົດ ແລະ ຈັດວາງຍຸດທະສາດ, ແຜນງານ ແລະ ຊັບພະຍາກອນເພື່ອຮັບປະກັນວ່າແຜນປະຕິບັດງານບັນລຸໄດ້ເປົ້າໝາຍທີ່ວາງໄວ້.



ຄະນະຊີ້ນໍາ (ຂັ້ນວິຊາການ) ເພື່ອການຮຽນຮູ້ຕະຫຼອດຊີວິດ ສະຫຼຸບຮ່າງແຜນດໍາເນີນງານແຫ່ງຊາດເພື່ອການຮຽນຮູ້ຕະຫຼອດຊີວິດ

# ຄວາມຮ່ວມມືລະຫວ່າງມະຫາວິທະຍາໄລ ລາວ-ໄທ ເພື່ອການຮຽນຮູ້ຕະຫຼອດຊີວິດ



*ຂັນທອງ ອິນທະຈັກ*
DVV International, ລາວ

ຈຸດປະສົງຫຼັກອັນໜຶ່ງຂອງຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ (ຄສສ, ມຊ) ແມ່ນເພື່ອຮ່ວມມືກັບສະຖາບັນຕ່າງໆ ໃນປະເທດເພື່ອນບ້ານ ເພື່ອເປີດກ້ວາງວິໄສທັດ ແລະ ສ້າງໂອກາດໃໝ່ໃຫ້ແກ່ການສົ່ງເສີມການຮຽນຮູ້ຕະຫຼອດຊີວິດໃນປະເທດລາວ. ຕໍ່ກັບສະພາບການດັ່ງກ່າວ, ຄສສ ໄດ້ດຳເນີນການຢ້ຽມຢາມພາກວິຊາການສຶກສາຕະຫຼອດຊີວິດ, ຄະນະສຶກສາສາດ, ມະຫາວິທະຍາໄລຈຸລາລົງກອນ ທີ່ບາງກອກ, ປະເທດໄທ ໃນເດືອນເມສາ 2024. ການຢ້ຽມຢາມຄັ້ງນີ້ນຳພາໂດຍ ທ່ານ ດຣ. ກົງສີ ຈຸນລະມະນີ ຮັກສາການ ຄສສ ແລະ ທ່ານ Christoph Jost, ຜູ້ອຳນວຍການປະຈຳພາກພື້ນຂອງ ດີວີວີ ອິນເຕີເນເຊີນແນວ ແລະ ຄະນະອາຈານຂອງມະຫາວິທະຍາໄລ. ຈຸດປະສົງຂອງການຢ້ຽມຢາມແມ່ນເພື່ອແລກປ່ຽນປະສົບການໃນການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ແລະ ຮັດແໜ້ນສາຍພົວພັນລະຫວ່າງສອງອົງການ.

ຄະນະສຶກສາສາດ ໄດ້ສືບຕໍ່ເສີມຂະຫຍາຍ ແລະ ຊຸກຍູ້ການຮຽນ-ການສອນຕະຫຼອດຊີວິດ ນັບແຕ່ປີ 2018 ເປັນຕົ້ນມາ ລວມທັງຜົນສຳເລັດຕ່າງໆ. ຄະນະວິຊາໄດ້ສ້າງຕັ້ງທີມງານຂອງອາຈານສອນວິຊາການຮຽນຮູ້ຕະຫຼອດຊີວິດ ທີ່ກຳລັງສອນເນື້ອໃນການຮຽນຮູ້ຕະຫຼອດຊີວິດໃນໂຄງການທີ່ແຕກຕ່າງກັນ. ນອກຈາກນັ້ນ, ເອກະສານການຮຽນຮູ້ສະເພາະຕະຫຼອດຊີວິດເຊັ່ນ: ຫຼັກສູດ ແລະ ແນວຄວາມຄິດສະເພາະປະເທດ, ປຶ້ມຄູ່ມືຄູ ແລະ ເອກະສານຄົ້ນຄວ້າໄດ້ຖືກພັດທະນາຂຶ້ນແລະປະຈຸບັນໄດ້ນຳໃຊ້ຢູ່ໃນຄະນະ ແລະ ສະຖາບັນຄູ່ຮ່ວມງານທາງວິຊາການ ລວມທັງສະຖາບັນສ້າງຄູໃນທົ່ວປະເທດ. ເນື້ອໃນຂອງຫຼັກສູດການຮຽນຮູ້ຕະຫຼອດຊີວິດໄດ້ຮັບການພັດທະນາເປັນແຕ່ລະໄລຍະ (2020, 2022, 2023). ໃນສົກຮຽນ 2023-2024, ຄສສ ໄດ້ນຳສະເໜີແນວຄວາມຄິດ, ທິດສະດີ ແລະ ຫຼັກການຂອງ ການຮຽນຮູ້ຕະຫຼອດຊີວິດ ເຂົ້າໃນຫຼັກສູດການຮຽນ-ການສອນຊຸດທີ 5, ໂດຍການເຂົ້າຮ່ວມຂອງນັກສຶກສາປີທີ 4 ຂອງຄະນະສຶກສາສາດ. ນອກນັ້ນ, ໄດ້ຈັດຝຶກອົບຮົມວິຊາຊີບ 113 ຄົນ; ໄດ້ຝຶກອົບຮົມຢູ່ 2 ແຂວງ (ນະຄອນຫຼວງວຽງຈັນ ແລະ ແຂວງບໍລິຄຳໄຊ), 5 ເມືອງ ແລະ 12 ສະຖາບັນການສຶກສາ.

ຜົນໄດ້ຮັບສຳຄັນທີ່ໄດ້ມາຈາກການຢ້ຽມຢາມສາມາດສະຫຼຸບໄດ້ດັ່ງນີ້:

ຄສສ ໄດ້ຮຽນຮູ້ຈາກພາກວິຊາການສຶກສາຕະຫຼອດຊີວິດ, ຄະນະສຶກສາສາດ, ມະຫາວິທະຍາໄລຈຸລາລົງກອນ ກ່ຽວກັບລະບົບການຄຸ້ມຄອງການສົ່ງເສີມ ເຊິ່ງປະຈຸບັນສາມາດປັບຕົວເຂົ້າກັບສະພາບການຂອງລາວໄດ້.

ທັງ ຄສສ ແລະ ຄະນະສຶກສາສາດ, ມະຫາວິທະຍາໄລຈຸລາລົງກອນ ໄດ້ຕົກລົງເຫັນດີໃນບົດບັນທຶກຄວາມເຂົ້າໃຈ. ບົດບັນທຶກນີ້ພວມໄດ້ຮັບການພິຈາລະນາຄືນ ເພື່ອໃຫ້ຄະນະກຳມາທິການຂອງຄະນະສຶກສາສາດ, ມະຫາວິທະຍາໄລຈຸລາລົງກອນ ຮັບຮອງເອົາ ກ່ອນຈະລົງນາມຢ່າງເປັນທາງການ. ຫຼັງຈາກນັ້ນ, ໄດ້ວາງແຜນການຮ່ວມມືຢ່າງເປັນທາງການຕື່ມອີກ.

ໄດ້ຕົກລົງໃຫ້ການຮ່ວມມືຄົ້ນຄວ້າຈັດຕັ້ງປະຕິບັດ ການຮຽນຮູ້ຕະຫຼອດຊີວິດຢູ່ ລາວ, ໄທ, ກຳປູເຈຍ ແລະ ຫວຽດນາມ ໂດຍມີພະນັກງານຕາງໜ້າຂອງທັງສອງອົງການເປັນຫົວໜ້າ ແລະ ນັກຄົ້ນຄ້ວາ.

ບົນພື້ນຖານຄຳໝັ້ນສັນຍາຮ່ວມກັນຂອງສອງຄະນະວິຊາຢູ່ນະຄອນຫຼວງວຽງຈັນ ແລະ ບາງກອກ ຄາດວ່າການຮ່ວມມືທີ່ມີໝາກຜົນນີ້ຈະສືບຕໍ່ໃນອະນາຄົດເພື່ອກ້າວໄປສູ່ການຮຽນຮູ້ຕະຫຼອດຊີວິດຢ່າງມີຄຸນນະພາບໃຫ້ແກ່ປະຊາຊົນທົ່ວປະເທດລາວ.



ຄະນະຜູ້ແທນລາວ ແລະ ໄທ ໃນໄລຍະຢ້ຽມຢາມທີ່ຄະນະສຶກສາສາດ, ມະຫາວິທະຍາໄລຈຸລາລົງກອນ, ບາງກອກ

**DVV International (ຫ້ອງການໃຫຍ່)**
https://www.dvv-international.de/en

**ແຫຼ່ງຂໍ້ມູນຈາກພາກພື້ນ**
https://www.dvv-international.la/news/publications https://www.aspbae.org/resource-centre
https://www.uil.unesco.org/en/library
https://seameocelll.org/publications

**ທີມບັນນາທິການ:** ດາລຸນນີ ສີສຸລາດ, Lotta Dyes, ຂັນທອງ ອິນທະຈັກ, ດອກຄຳ ຊົມສີຫາປັນຍາ, ສົມໃຈ ແກ້ວເມກ

**ຫົວໜ້າບັນນາທິການ**: Christoph Jost

**ຈັດພິມໂດຍ ຮ່ວມມືກັບຄູ່ຮ່ວມງານໃນ ສປປ ລາວ, ກຳປູເຈຍ, ອາຊີຕາເວັນອອກສຽງໃຕ້.**

**ສື່ສິ່ງພິມ**
Life Skills Handbook for Facilitator (Lao)
Women Empowerment Handbook for Facilitator (Lao)
Activity for Youth and Children Handbook for Facilitator (Lao)
Curriculum managerALE (Lao)
Curriculum institutionALE (Lao)
Curriculum globALE (Lao)
DVV International Annual Report 2023 (Eng)
Handbook for NFE Facilitators (Lao)
Soft Skills Training Manual for Falicitator (Lao)

**ສິ່ງພິມທັງໝົດສາມາດຮັບໄດ້ຟຣີຢູ່ທີ່ ຫ້ອງການດີວີວີ ອິນເຕີເນເຊິນແນວ ປະຈຳພາກພື້ນ**

**DVV International**
Regional Office Southeast Asia
383/19 Unit; Watnak Nyai Road
Thaphalanxay Village, Sisatthanak District
P.O. Box 1215, Vientiane, Lao PDR
Tel.: +856 21 315832-3
Fax: +856 21 312511
info@dvv-international.la
www.dvv-international.la

Education for Everyone. Worldwide. Lifelong.